ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

17-23 ມີນາ 2023

ປີທີ 12

ສະບັບທີ 914

ລາຍສັບປະດາ


## ປະທານສະພາແຫ່ງຊາດ ໂອ້ລົມ ແລະ ໃຫ້ທິດຊີ້ນຳຄະນະພັກອົງການປົກຄອງ ແຂວງຜົ້ງສາລີ



ໃນໂອກາດເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຄະນະພັກ, ອົງການປົກຄອງແຂວງຜົ້ງສາລີ ລະຫວ່າງວັນທີ 14-16 ມີນາ 2023 ທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ໄດ້ມີຄຳເຫັນໂອ້ລົມ ແລະ ໃຫ້ທິດຊີ້ນຳ 12 ຂໍ້ຕໍ່ຄະນະພັກ, ອົງການປົກຄອງ ແຂວງຜົ້ງສາລີ ດັ່ງນີ້:

1. ຄະນະພັກ, ສະພາປະຊາຊົນແຂວງ, ອົງການປົກຄອງແຂວງ, ອົງການປົກຄອງທ້ອງຖິ່ນທຸກຂັ້ນ ຈະຕ້ອງໄດ້ເພີ່ມທະວີຄວາມສາມັກຄີ, ຄວາມເປັນເອກະພາບພາຍໃນບົນພື້ນຖານແນວທາງນະໂຍບາຍຂອງພັກ, ມະຕິ, ຄຳສັ່ງ, ລະບຽບກົດໝາຍ ແລະ ລະບຽບການ, ກົນໄກວິທີການເຮັດວຽກທີ່ວາງອອກ; ເພີ່ມທະວີຄວາມຮັບຜິດຊອບການເມືອງ, ຄວາມຮັບຜິດຊອບທີ່ໄດ້ຮັບການມອບໝາຍໃຫ້ສູງສົ່ງ ແລະ ປັບປຸງແບບແຜນການຊີ້ນຳ-ນຳພາ, ແບບແຜນວິທີເຮັດວຽກ ໃຫ້ແທດຕົວຈິງ, ມີວິທະຍາສາດ; ກຳແໜ້ນແນວທາງ, ມະຕິ, ຄຳສັ່ງ ຂອງພັກ, ລະບຽບກົດໝາຍຂອງລັດ ແລະ ກຳແໜ້ນພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຄະນະພັກ, ອຳນາດການປົກຄອງແຕ່ລະຂັ້ນ ແລະ ການເຮັດແທ້ທຳຈິງ ເພື່ອປະເທດຊາດ, ເພື່ອປະຊາຊົນ; ເພີ່ມທະວີຄວາມອົດທົນ, ຄວາມເສຍສະຫຼະເພື່ອສ່ວນລວມ; ຄວາມອົດ

ອ່ານຕໍ່ໜ້າ 4

## ສືບຕໍ່ເສີມຂະຫຍາຍຜົນງານ ແລະ ມູນເຊື້ອຂອງພັກປະຊາຊົນ ປະຕິວັດລາວ

ການສ້າງຕັ້ງພັກປະຊາຊົນ ປະຕິວັດລາວ ຂຶ້ນໃນວັນທີ 22 ມີນາ ປີ 1955 ແມ່ນເຫດການການເມືອງສຳຄັນທີ່ຍິ່ງໃຫຍ່ ແລະ ເປັນບາດລ້ຽວຕັດສິນໃນປະຫວັດສາດແຫ່ງການຄົງຕົວ ແລະ ຂະຫຍາຍຕົວຂອງຊາດລາວເຮົາ. ນັບແຕ່ນັ້ນມາ ພາລະກິດປະຕິວັດຢູ່ປະເທດເຮົາ ໄດ້ມີການນຳພາໂດຍກົງຂອງພັກປະຕິວັດ ຂອງຊົນຊັ້ນກຳມະກອນລາວເຮົາ ແລະ ເຮັດໃຫ້ຂະບວນການຕໍ່ສູ້ກູ້ຊາດຂອງປະຊາຊົນເຮົາມີບາດກ້າວຂະຫຍາຍຕົວທາງດ້ານຄຸນນະພາບ. ການສ້າງຕັ້ງພັກແມ່ນການລວມຍອດຂອງມູນເຊື້ອຮັກຊາດອັນສູງສົ່ງ ແລະ ນ້ຳໃຈຕໍ່ສູ້ອັນອົງອາດກ້າແກ່ນເດັດຂາດ ບໍ່ອ່ອນຍອມຂອງຊາດລາວເຮົາ ທີ່ໄດ້ຜ່ານການທົດສອບອັນລະອຽດລະອ້ຽວຂ້ຽວຂາດ ໃນການຕໍ່ສູ້ເພື່ອປົກປັກຮັກສາ ແລະ ສ້າງສາປະເທດຊາດ.

ພັກປະຊາຊົນ ປະຕິວັດລາວ ທີ່ມີກຽດສະຫງ່າ, ຜູ້ຈັດຕັ້ງ ແລະ ນຳພາທຸກໄຊຊະນະຂອງການປະຕິວັດລາວ, ຜູ້ທີ່ໄດ້ນຳພາປະຊາຊົນລາວບັນດາ

ອ່ານຕໍ່ໜ້າ 8

## ຄະນະຜູ້ແທນຂັ້ນສູງຂອງສະພາແຫ່ງຊາດລາວ ເຂົ້າຮ່ວມກອງປະຊຸມໃຫຍ່ IPU ຄັ້ງທີ 146



ອ່ານຕໍ່ໜ້າ 4

## ປຶກສາຫາລືຄົ້ນຄວ້າຕຳແໜ່ງບໍລິຫານ ແລະ ກົງຈັກເສນາທິການຂອງ ສພຊ

(ສພຊ) ເພື່ອເປັນການປຶກສາຫາລື ແລະ ຕົກລົງເປັນເອກະພາບ ກ່ຽວກັບຕຳແໜ່ງບໍລິຫານຂອງປະທານ, ຮອງປະທານສະພາປະຊາຊົນແຂວງຊຸດທີ II; ປຶກສາຫາລື ແລະ ຕົກລົງເປັນເອກະພາບກ່ຽວກັບຕຳແໜ່ງບໍລິຫານປະເພດ 4 ຢູ່ສະພາປະຊາຊົນຂັ້ນແຂວງ (ສພຊ) ຊຸດທີ II ແລະ ເພື່ອຄວາມເປັນເອກະພາບກ່ຽວກັບການສ້າງຕັ້ງຂະແໜງທີ່ສັງກັດກົງຈັກການຈັດຕັ້ງສະພາປະຊາຊົນຂັ້ນແຂວງ



ອ່ານຕໍ່ໜ້າ 10

## ສສຊ ນະຄອນຫຼວງວຽງຈັນ ພົບປະພະນັກງານ-ລັດຖະກອນ ຂອງ ກຊສ



(ສພຊ) ວັນທີ 10 ມີນາຜ່ານມາ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ນຳໂດຍທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ສະ

ອ່ານຕໍ່ໜ້າ 4

## ສ້າງຄວາມເຂັ້ມແຂງໃຫ້ພະນັກງານ-ລັດຖະກອນ ກຳມາທິການວັດທະນະທຳ-ສັງຄົມ

(ສພຊ) ກອງປະຊຸມເຝິກອົບຮົມສ້າງຄວາມເຂັ້ມແຂງຍົກລະດັບໃຫ້ພະນັກງານ-ລັດຖະກອນຂອງກຳມາທິການວັດທະນະທຳ-ສັງຄົມ ປະຈຳປີ 2022 ຊຸດທີ 3 ໄດ້ຈັດຂຶ້ນໃນວັນທີ 9 ມີນາຜ່ານມາ, ທີ່ຫ້ອງປະຊຸມເຮືອນພັກກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໂດຍການເປັນປະທານ



ອ່ານຕໍ່ໜ້າ 4



ເຜີຍແຜ່ຜົນສຳເລັດ ກອງປະຊຸມ...

ອ່ານຕໍ່ໜ້າ 5



ກອງປະຊຸມ...

ອ່ານຕໍ່ໜ້າ 6



ຮອງປະທານສະພາ ເຂດ 6 ...

ອ່ານຕໍ່ໜ້າ 7

**ຊົມເຊີຍວັນສ້າງຕັ້ງພັກປະຊາຊົນ ປະຕິວັດລາວ ຄົບຮອບ 68 ປີ ຢ່າງສຸດໃຈ!**

# ຍົກລະດັບຄວາມຮູ້ຄວາມສາມາດ ໃຫ້ເສນາທິການຂອງກຳມາທິການກົດໝາຍ



(ສພຊ) ເພື່ອຮັບປະກັນໃຫ້ວຽກງານກຳມາທິການກົດໝາຍໄດ້ດຳເນີນຢ່າງມີຄຸນນະພາບ ໃນວັນທີ 9 ມີນາຜ່ານມາ, ທີ່ສະພາແຫ່ງຊາດ ກຳມາທິການກົດໝາຍ ໄດ້ຈັດກອງປະຊຸມສຳມະນາຍົກລະດັບຄວາມຮູ້ຄວາມສາມາດ ໃຫ້ພະນັກງານ-ລັດຖະກອນ ຂອງກຳມາທິການກົດໝາຍ ປະຈຳປີ 2022 ໂດຍການເປັນປະທານຂອງທ່ານ ອຳໄພ ຈິດມານົບ ຮອງປະທານກຳມາທິການກົດໝາຍສະພາແຫ່ງຊາດ, ມີທ່ານຮອງປະທານກຳມາທິການກົດໝາຍ, ຄະນະກົມ, ຄະນະພະແນກ ແລະ ພະນັກງານ-ວິຊາການ ພ້ອມທັງວິທະຍາກອນທີ່ຖືກເຊີນເຂົ້າຮ່ວມ.

ໃນພິທີ, ທ່ານ ອຳໄພ ຈິດມານົບ ໄດ້ກ່າວວ່າ: ກອງປະຊຸມ ຈະໄດ້ຮັບຟັງບົດສະເໜີການຕິດຕາມກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ, ບົດສະເໜີເຕັກນິກການຄົ້ນຄວ້າເນື້ອໃນຂອງຮ່າງກົດໝາຍ ທີ່ມີປະສິດທິພາບ ແລະ ປະສິດທິຜົນ ແລະ ບົດສະເໜີທັກສະການຄົ້ນຄວ້າວິເຄາະ, ວິໄຈບັນຫາກ່ຽວກັບການຕີຄວາມໝາຍ ແລະ ອະທິບາຍກົດໝາຍ ເຫັນວ່າຫົວຂໍ້ທີ່ກ່າວມານັ້ນ ລ້ວນແຕ່ແມ່ນພາລະບົດບາດຂອງກຳມາທິການກົດໝາຍ ເຊິ່ງວຽກງານການຕິດຕາມກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ເປັນວຽກງານໜຶ່ງທີ່ມີຄວາມໝາຍຄວາມສຳຄັນ ແລະ ຈຳເປັນໃນຂະບວນການສ້າງ, ປັບປຸງ ແລະ ຈັດຕັ້ງປະຕິບັດກົດໝາຍ ໃນທົ່ວສັງຄົມ ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດກົດໝາຍ ມີຜົນສັກສິດ ແລະ ຍຸຕິທຳ, ວຽກງານການຄົ້ນຄວ້າເນື້ອໃນຂອງຮ່າງກົດໝາຍ ກໍແມ່ນອີກວຽກໜຶ່ງທີ່ສຳຄັນ ໃນການເປັນເສນາທິການໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ກໍຄື ສະພາແຫ່ງຊາດ ໃນການປະຕິບັດພາລະບົດບາດດ້ານນິຕິບັນຍັດ ປະກອບສ່ວນສ້າງລັດແຫ່ງ ສປປ ລາວ ໃຫ້ກາຍເປັນລັດແຫ່ງກົດໝາຍ ແລະ ວຽກງານການຕີຄວາມໝາຍ ແລະ ອະທິບາຍກົດໝາຍ ກໍແມ່ນວຽກງານໜຶ່ງທີ່ສຳຄັນຂອງກຳມາທິການກົດໝາຍ ໃນການປະຕິບັດພາລະບົດບາດເປັນເສນາທິການໃຫ້ແກ່ຄະນະປະຈຳ ໃນການຄົ້ນຄວ້າຕີຄວາມໝາຍ ແລະ ອະທິບາຍກົດໝາຍເປັນສິດ ແລະ ໜ້າທີ່ ດ້ານນິຕິບັນຍັດອັນຕົ້ນຕໍຂອງຄະນະປະຈຳສະພາແຫ່ງຊາດ ເພື່ອເຮັດໃຫ້ກົດໝາຍ ທີ່ປະກາດໃຊ້ໄປແລ້ວໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນເອກະພາບ ແລະ ທ່ານໄດ້ສະເໜີໃຫ້ບັນດານັກສຳມະນາກອນ ຫຼັງຈາກທີ່ໄດ້ຮັບຟັງບົດບັນຍາຍຈາກນັກວິທະຍາກອນແລ້ວ ໃຫ້ແລກປ່ຽນກັບວິທະຍາກອນ ເພື່ອເຮັດໃຫ້ການປະຕິບັດໜ້າທີ່ວຽກງານ ຂອງກຳມາທິການກົດໝາຍ ໄດ້ຮັບການປັບປຸງດີຂຶ້ນໃນຕໍ່ໜ້າ.

(ສອນສັກ ວັນວິໄຊ)

# ສ້າງຂີດຄວາມສາມາດ ໃຫ້ເສນາທິການຂອງກຳມາທິການບັນດາເຜົ່າ



(ສພຊ) ເພື່ອຍົກລະດັບຄວາມຮູ້, ຄວາມເຂົ້າໃຈ ໃຫ້ແກ່ພະນັກງານວິຊາການ ກ່ຽວກັບພາລະບົດບາດຂອງກຳມາທິການບັນດາເຜົ່າ ແລະ ສອງກົມທີ່ເປັນເສນາທິການຊ່ວຍວຽກກຳມາທິການບັນດາເຜົ່າ ສະພາແຫ່ງຊາດ ຊຸດທີ IX; ການເປັນເສນາທິການໃນການເກັບກຳ, ສັງລວມຂໍ້ມູນ, ການຕິດຕາມກວດກາວຽກງານຊົນເຜົ່າ, ສາສະໜາ, ວຽກງານແນວໂຮມ ແລະ ຊັ້ນຄົນ, ວຽກງານ 3 ສ້າງ ວຽກງານການປົກຄອງທ້ອງຖິ່ນ ແລະ ວຽກງານພັດທະນາຊົນນະບົດ ຢ່າງມີຈຸດສຸມ, ຮັບປະກັນການສະໜອງຂໍ້ມູນທີ່ເປັນພື້ນຖານໄດ້ຢ່າງທັນເວລາ ແລະ ມີປະສິດທິພາບ; ພ້ອມທັງຍົກສູງຄຸນນະພາບໃນການປະຕິບັດໜ້າທີ່ການເມືອງຂອງພະນັກງານວິຊາການ ທັງຮັບປະກັນການເປັນເສນາທິການທີ່ດີໃຫ້ແກ່ກຳມາທິການບັນດາເຜົ່າ ນັບມື້ເຂັ້ມແຂງຂຶ້ນເທື່ອລະກ້າວ; ໃນວັນທີ 14-15 ມີນາ 2023 ທີ່ສະພາແຫ່ງຊາດ ນະຄອນຫຼວງວຽງຈັນ, ກຳມາທິການບັນດາເຜົ່າ ສະພາແຫ່ງຊາດ ໄດ້ຈັດກອງປະຊຸມເຝິກອົບຮົມຍົກລະດັບຂີດຄວາມສາມາດ ປະຈຳປີ 2022 ໃຫ້ວິຊາການຂອງກຳມາທິການບັນດາເຜົ່າ ແລະ ວິຊາການທີ່ຮັບຜິດຊອບວຽກງານເຜົ່າ ແລະ ສາສະໜາ ປະຈຳເຂດເລືອກຕັ້ງທົ່ວປະເທດ ໂດຍການເປັນປະທານຂອງທ່ານ ສິງ ເລືອງວິຫານ ຫົວໜ້າກົມວຽກງານຊົນເຜົ່າ, ເຂົ້າຮ່ວມມີທ່ານ ນາງ ທັດສະດາພອນ ຈັນທະມາດ ຮອງປະທານກຳມາທິການບັນດາເຜົ່າ, ມີຫົວໜ້າ-ຮອງຫົວໜ້າກົມ, ພະນັກງານວິຊາການຂອງກຳມາທິການ ແລະ ວິຊາການທີ່ເປັນເສນາທິການໃຫ້ກຳມະການບັນດາເຜົ່າໃນ 18 ເຂດເລືອກຕັ້ງທົ່ວປະເທດ.

ໂອກາດນີ້, ທ່ານ ນາງ ທັດສະດາພອນ ຈັນທະມາດ ໄດ້ມີຄຳເຫັນໂອ້ລົມວ່າ: ຊຸດເຝິກອົບຮົມຄັ້ງນີ້ ເປັນການເຝິກສະເພາະໃຫ້ພະນັກງານວິຊາການທີ່ເປັນເສນາທິການໃຫ້ແກ່ຂັ້ນນຳຂອງຕົນ; ດັ່ງນັ້ນ, ເພື່ອເຮັດໃຫ້ຊຸດເຝິກອົບຮົມບັນລຸຕາມຈຸດປະສົງ ແລະ ຄາດໝາຍທີ່ວາງໄວ້, ຮຽກຮ້ອງມາຍັງພະນັກງານ-ລັດຖະກອນ ທີ່ເຂົ້າຮ່ວມເຝິກອົບຮົມ ຈົ່ງພ້ອມກັນເອົາໃຈໃສ່ຄົ້ນຄວ້າ, ເຊີດຊູຄວາມເປັນເຈົ້າການໃນການຮັບເອົາຄວາມຮູ້ຈາກວິທະຍາກອນ ແລະ ຊອກຮູ້ຮໍ່າຮຽນເພີ່ມຈາກເພື່ອນສະຫາຍດ້ວຍກັນ, ແລກປ່ຽນບົດຮຽນປະສົບການຮ່ວມກັນ ເພື່ອນຳເອົາຄວາມຮູ້ ແລະ ປະສົບການໄປນຳໃຊ້ເຂົ້າໃນວຽກງານຕົວຈິງ ສ້າງຕົນເອງໃຫ້ກາຍເປັນພະນັກງານທີ່ມີຄວາມຮູ້, ຄວາມສາມາດ ແລະ ກາຍເປັນພະນັກງານທີ່ດີໃນອະນາຄົດ. ການປະຕິບັດບົດບາດ ຂອງສະພາແຫ່ງຊາດ ທີ່ຈະສຳເລັດນັ້ນແມ່ນການປະກອບສ່ວນຂອງເສນາທິການຊ່ວຍວຽກ ເປັນຕົ້ນກົມວຽກງານຊົນເຜົ່າ ແລະ ກົມວຽກງານສາສະໜາ ຕ້ອງໄດ້ຈັດຕັ້ງປະຕິບັດມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກຳມາທິການບັນດາເຜົ່າ ສະບັບເລກທີ 168/ຄປຈ, ລົງວັນທີ 05 ກໍລະກົດ 2021, ໃນນັ້ນ ຕ້ອງໄດ້ຮັບຮູ້ ແລະ ເຂົ້າໃຈການປະຕິບັດພາລະບົດບາດເປັນເສນາທິການໃຫ້ແກ່ສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ ໃນການສ້າງ ແລະ ປັບປຸງກົດໝາຍ, ການພິຈາລະນາບັນຫາສຳຄັນຂອງຊາດ, ການຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ນິຕິກຳໃຕ້ກົດໝາຍ ໃນຂົງເຂດວຽກງານຊົນເຜົ່າ, ສາສະໜາ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ກອງທຶນຫຼຸດຜ່ອນຄວາມທຸກຍາກ, ທະນາຄານພັດທະນາຊົນນະບົດ, ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ, ການປົກຄອງທ້ອງຖິ່ນ, ຈັດສັນພູມລຳເນົາ ແລະ ອາຊີບຄົງທີ່, ສ້າງບ້ານພັດທະນາ, 3 ສ້າງ, ໂຄງການລົງທຶນ ແລະ ພັດທະນາທີ່ມີຜົນກະທົບຕໍ່ປະຊາຊົນບັນດາເຜົ່າ.

ໃນກອງປະຊຸມ, ຜູ້ເຂົ້າຮ່ວມໄດ້ຮັບຟັງບົດຮຽນໃນການຂຽນບົດສະຫຼຸບ, ບົດລາຍງານຈາກເຂດເລືອກຕັ້ງຫາກົມເສນາທິການຂອງກຳມາທິການບັນດາເຜົ່າ; ພາລະບົດບາດຂອງກຳມາທິການບັນດາເຜົ່າ ແລະ ສອງກົມທີ່ເປັນເສນາທິການ; ພາລະບົດບາດຂອງແນວໂຮມໃນການເຕົ້າໂຮມຄວາມສາມັກຄີຂອງປະຊາຊົນບັນດາເຜົ່າ; ກ່ຽວກັບວິທີການ ແລະ ຂັ້ນຕອນການແກ້ໄຂປາກົດການຫຍໍ້ທໍ້ທາງດ້ານສາສະໜາ; ການຈັດຕັ້ງປະຕິບັດພາລະບົດບາດຂອງກົມການປົກຄອງທ້ອງຖິ່ນ ແລະ ຕິດພັນກັບວຽກງານ 3 ສ້າງ; ບົດບາດຂອງກົມພັດທະນາຊົນນະບົດໃນການຄຸ້ມຄອງບໍລິຫານບັນດາຈຸດສຸມ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມ ໄດ້ມີການສົນທະນາ, ຖາມ-ຕອບ ແລະ ແລກປ່ຽນຄຳຄິດຄຳເຫັນຮ່ວມກັນ.




# ຄັດໂດຍ: ທອມສະນິດ

▱ ປັດຈຸບັນ, ພື້ນທີ່ໃຫ້ບໍລິຫານໂທລະຄົມມະນາຄົມລະບົບ 2G ໄດ້ກວມເອົາ 96%, 3G ໄດ້ກວມເອົາ 83% ແລະ 4G ໄດ້ກວມເອົາ 75% ຂອງຈຳນວນບ້ານທັງໝົດທົ່ວປະເທດ. ຂະນະທີ່ຈຳນວນຜູ້ນຳໃຊ້ໂທລະສັບຕັ້ງໂຕະມີສາຍ ແລະ ບໍ່ມີສາຍ ມີຫຼາຍກ່ວາ 1,9 ລ້ານກວ່າເລກໝາຍ, ໂທລະສັບມືຖື 14 ລ້ານກວ່າເລກໝາຍ, ຜູ້ນຳໃຊ້ອິນເຕີເນັດ (ລະບົບມີສາຍ ແລະ ບໍ່ມີສາຍ) ຈຳນວນ 4,4 ລ້ານກວ່າບັນຊີ, ອັດຕາການຊົມໃຊ້ອິນເຕີເນັດກວມເອົາ 63% ຂອງປະຊາກອນໃນທົ່ວປະເທດ.

**ໜສພ. ປະເທດລາວ 14/03/2023**

▱ ໄລຍະຜ່ານມາສະຖາບັນເລືອດແຫ່ງຊາດໄດ້ມີຄວາມພະຍາຍາມໂຄສະນາໃຫ້ສັງຄົມໄດ້ຮັບຮູ້ ແລະ ເຂົ້າໃຈເຖິງຄວາມໝາຍຄວາມສຳຄັນ ແລະ ຄວາມຈຳເປັນຂອງເລືອດ ເຊິ່ງໃນປີ 2022 ການປຸກລະດົມຮັບບໍລິຈາກເລືອດໃນທົ່ວປະເທດສາມາດປະຕິບັດໄດ້ 67.017 ຖົງເທົ່າກັບ 98,5% ເຊິ່ງເປົ້າໝາຍແມ່ນ 68.000 ຖົງ ແລະ ໃນປີ 2023 ການປຸກລະດົມການບໍລິຈາກເລືອດຄາດໝາຍບັນລຸ 73.000 ຖົງ. ສຳລັບປີ 2024 ໄດ້ຕັ້ງເປົ້າໃຫ້ໄດ້ 78 ພັນຖົງ ແລະ ໃນປີ 2025 ໃຫ້ໄດ້ 8.400 ຖົງ.

**ໜສພ. ປະເທດລາວ 15/03/2023**

▱ ຂໍ້ມູນຈາກຄະນະກຳມາທິການແມ່ນ້ຳຂອງສາກົນລາຍງານໃຫ້ຮູ້ວ່າ: ໄທ ແລະ ຫວຽດນາມ ເປັນສອງປະເທດທີ່ມີການຜະລິດເຂົ້າ ແລະ ພືດອື່ນໆ ຢ່າງຫຼວງຫຼາຍ ແລະ ມີຄວາມຫຼາກຫຼາຍ, ໃນຂະນະທີ່ການກະສິກຳຂອງກຳປູເຈຍ ແລະ ສປປລາວ ໃນປັດຈຸບັນມີການພັດທະນາໜ້ອຍລົງ ໂດຍເນື້ອທີ່ກະສິກຳຢູ່ໃນອ່າງແມ່ນ້ຳຂອງຕອນລຸ່ມຫຼາຍກວ່າ 10 ລ້ານເຮັກຕາ ໄດ້ຖືກນຳໃຊ້ເຂົ້າໃນການຜະລິດເຂົ້າ ເຊິ່ງກວມເອົາຫຼາຍກວ່າ 80% ຂອງການຜະລິດກະສິກຳ, ໃນລະຫວ່າງປີ 2011-2014 ຢູ່ກຳປູເຈຍ, ໄທ ແລະ ຫວຽດນາມ ຈຳນວນປະຊາກອນທີ່ເຮັດໄຮ່ເຮັດນາເພີ່ມຂຶ້ນໂດຍສະເລ່ຍ 9% ຂຶ້ນເປັນ 6,9 ລ້ານຄົນ, ໃນຂະນະທີ່ກະສິກອນທັງໝົດໃນ ສປປລາວ ຫຼຸດລົງ.

**ໜສພ. ປະເທດລາວ 15/03/2023**

# ຜົນສຳເລັດການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2023

ຕໍ່ຈາກສະບັບກ່ອນ...

3. ການຄົ້ນຄວ້າກຳນົດແຜນການຕິດຕາມກວດກາຂອງຄະນະປະຈຳສະພາແຫ່ງຊາດ, ບັນດາກຳມາທິການ ແລະ ກົງຈັກການຈັດຕັ້ງສະພາແຫ່ງຊາດໃຫ້ສຳເລັດແຕ່ຫົວທີດ້ວຍການກຳນົດຫົວຂໍ້, ແຕ່ງຕັ້ງຄະນະລົງຕິດຕາມກວດກາ, ກຳນົດເປົ້າໝາຍລົງຕິດຕາມກວດກາໃຫ້ລະອຽດ, ສະໜອງງົບປະມານໃຫ້ສົມຄູ່ກັບວຽກງານດັ່ງກ່າວ ລວມທັງການສະຫຼຸບລາຍງານຜົນການຕິດຕາມກວດກາ ໃຫ້ມີຈຸດສຸມ ຈະເຮັດໃຫ້ວຽກງານຕິດຕາມກວດກາ ມີຄຸນນະພາບ, ສາມາດແກ້ໄຂບັນ ຫາທີ່ເກີດຂຶ້ນໃນສັງຄົມທັນເວລາ;

4. ການກຳນົດນິຕິກຳທີ່ຊັດເຈນ ກ່ຽວກັບລະບອບແບບແຜນວິທີເຮັດວຽກ ຂອງກົງຈັກພາຍໃນສະພາແຫ່ງຊາດກັບຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໂດຍສະເພາະກົນໄກປະສານງານຕາມສາຍຕັ້ງ ແລະ ສາຍຂວາງ ໃນລະບົບສະພາ ຈະເຮັດໃຫ້ການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ມີປະສິດທິຜົນສູງ;

5. ການຄົ້ນຄວ້າກຳນົດແຜນການຢ່າງລະອຽດ ແລະ ລວມສູນແຕ່ຫົວທີ ໂດຍສະເພາະ ການກະກຽມຫົວຂໍ້ເນື້ອໃນການຈັດຝຶກອົບຮົມສຳມະນາພາຍໃນສະພາແຫ່ງຊາດ ແລະ ທ້ອງຖິ່ນ ໃຫ້ຊັດເຈນ, ຖືກຕ້ອງຕາມແຕ່ລະເປົ້າໝາຍ ແລະ ສອດຄ່ອງກັບການເຄື່ອນໄຫວວຽກງານຕົວຈິງ ຈະເຮັດໃຫ້ວຽກງານດັ່ງກ່າວ ບັນລຸຜົນສຳເລັດຕາມແຜນ ການທີ່ວາງໄວ້;

6. ການເພີ່ມທະວີການປະສານສົມທົບວຽກງານ ລະຫວ່າງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງກັບສະພາປະຊາຊົນຂັ້ນແຂວງ ໃນການເກັບກຳຂໍ້ມູນສະພາບການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງ ຄົມ ຢູ່ພາຍໃນທ້ອງຖິ່ນ ເພື່ອນຳສະເໜີກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ພິ ຈາລະນາ ຈະເຮັດໃຫ້ການເຄື່ອນໄຫວຂອງສະພາປະຊາຊົນຂັ້ນແຂວງ ໄດ້ຮັບຜົນສຳເລັດຕາມຄາດໝາຍທີ່ວາງໄວ້.

**II. ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2023**

ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານ ປະຈຳປີ 2023 ບັນລຸຕາມຄາດໝາຍທີ່ວາງໄວ້, ສະພາແຫ່ງຊາດກຳນົດແຜນການວຽກງານແຕ່ລະດ້ານ ດັ່ງນີ້:

ກ. ຄາດໝາຍສູ້ຊົນ

1) ຮັບປະກັນການປະຕິບັດພາລະບົດບາດນິຕິບັນຍັດ ໂດຍສະເພາະແຜນການສ້າງ ແລະ ປັບປຸງກົດໝາຍ ໃນປີ 2023 ຂອງສະພາແຫ່ງຊາດ ໃຫ້ບັນລຸຕາມແຜນການທີ່ວາງໄວ້;

2) ຮັບປະກັນການພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ໃຫ້ສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງ;

3) ຮັບປະກັນການປະຕິບັດພາລະບົດບາດຕິດຕາມກວດກາ ຂອງສະພາແຫ່ງຊາດ ຕາມລັດຖະທຳມະນູນ ແລະ ກົດໝາຍ ໃຫ້ມີປະສິດທິພາບ, ປະສິດທິຜົນ;

4) ເອົາໃຈໃສ່ຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານ-ລັດຖະກອນໄປຕາມແຜນການລວມຂອງສະພາແຫ່ງຊາດ;

5) ເພີ່ມທະວີການພົວພັນຮ່ວມມື ແລະ ປະສານງານຢ່າງກົມກຽວ ລະຫວ່າງສະພາແຫ່ງຊາດ ກັບບັນດາອົງການຂອງລັດ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ມີຄວາມຄ່ອງຕົວດີຂຶ້ນກວ່າເກົ່າ ເພື່ອຮັບປະກັນການປະຕິບັດໜ້າທີ່ວຽກງານຂອງສະພາແຫ່ງຊາດ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ;

ອ່ານຕໍ່ສະບັບໜ້າ...

## ພົບປະເຮັດວຽກ ແລະ ຢ້ຽມຢາມສະຖານທີ່ທ່ອງທ່ຽວເມືອງເຟືອງ



(ສພຊ) ໃນວັນທີ 10 ມີນາ 2023 ກອງທຶນຊ່ວຍເຫຼືອສັງຄົມສະພາແຫ່ງຊາດ ແລະ ສະຫະພັນແມ່ຍິງສະພາແຫ່ງຊາດ ນຳພາໂດຍທ່ານ ດຣ. ນາງ ວິພາວັນ ພົມວິຫານ ປະທານກອງທຶນຊ່ວຍເຫຼືອສັງຄົມສະພາແຫ່ງຊາດ ແລະ ທ່ານ ນາງ ມະນີວັນ ເຍຍປາວເຮີ ປະທານຄະນະບໍລິຫານງານສະຫະພັນແມ່ຍິງສະພາແຫ່ງຊາດ ພ້ອມດ້ວຍຄອບຄົວການນຳຂອງສະພາແຫ່ງຊາດ ແລະ ສະມາຊິກສະຫະພັນແມ່ຍິງພາຍໃນສະພາແຫ່ງຊາດ ໄດ້ໄປຢ້ຽມຢາມ ແລະ ພົບປະຢູ່ເມືອງເຟືອງ ແຂວງວຽງຈັນ ເພື່ອສ້າງຂະບວນການສະເຫຼີມສະຫຼອງເນື່ອງໃນໂອກາດວັນແມ່ຍິງສາກົນ ຄົບຮອບ 113 ປີ (08/03/1910-08/03/2023) ໃຫ້ເປັນຂະບວນຟົດຟື້ນ ທັງເປັນການເຕົ້າໂຮມຄວາມສາມັກຄີ ແລະ ພົບປະແລກປ່ຽນບົດຮຽນເຊິ່ງກັນແລະກັນ ຂອງເອື້ອຍນ້ອງແມ່ຍິງສະພາແຫ່ງຊາດ ຮ່ວມກັບເອື້ອຍນ້ອງແມ່ຍິງແຂວງວຽງຈັນ.

ກອງປະຊຸມພົບປະລະຫວ່າງເອື້ອຍນ້ອງແມ່ຍິງສະພາແຫ່ງຊາດ ກັບຄະນະສະຫະພັນແມ່ຍິງແຂວງວຽງຈັນ ແລະ ແມ່ຍິງເມືອງເຟືອງ ໄດ້ຈັດຂຶ້ນທີ່ສະໂມສອນເມືອງເຟືອງ ແຂວງວຽງຈັນ ໂດຍການເປັນປະທານຮ່ວມຂອງທ່ານ ດຣ. ນາງ ວິພາວັນ ພົມວິຫານ, ທ່ານ ນາງ ມະນີວັນ ເຍຍປາວເຮີ, ທ່ານ ຄຳເຜັດ ຈັນສົມພູ ເຈົ້າເມືອງໆເຟືອງ, ທ່ານ ນາງ ມະໄລສີ ທຳມະໂຄດ ປະທານສະຫະພັນແມ່ຍິງແຂວງວຽງຈັນ ແລະ ທ່ານ ນາງ ຈັນທະໜອມ ສິດທິດຳພາ ພັນລະຍາຂອງທ່ານເຈົ້າແຂວງໆວຽງຈັນ; ມີຄອບຄົວການນຳຂອງສະພາແຫ່ງຊາດ ແລະ ສະມາຊິກສະຫະພັນແມ່ຍິງພາຍໃນສະພາແຫ່ງຊາດ, ສະຫະພັນແມ່ຍິງແຂວງວຽງຈັນ ແລະ ສະຫະພັນແມ່ຍິງເມືອງເຟືອງເຂົ້າຮ່ວມຢ່າງພ້ອມພຽງ.

ໃນທີ່ປະຊຸມໄດ້ຮັບການກ່າວຕ້ອນຮັບຈາກທ່ານເຈົ້າເມືອງໆເຟືອງ, ຮັບຟັງການລາຍງານກ່ຽວກັບການສ້າງວຽກເຮັດງານທຳ, ການຜະລິດສິນຄ້າຂອງແມ່ຍິງ ເພື່ອສ້າງລາຍຮັບ ແລະ ແກ້ໄຂຊີວິດການເປັນຢູ່ໃນຄອບຄົວໃຫ້ດີຂຶ້ນ ຈາກປະທານສະຫະພັນແມ່ຍິງແຂວງວຽງຈັນ ແລະ ຮັບຟັງການລາຍງານບົດຮຽນກ່ຽວກັບການສ້າງຕັ້ງກອງທຶນຊ່ວຍເຫຼືອສັງຄົມ ສະພາແຫ່ງຊາດ; ພ້ອມນັ້ນ, ໄດ້ແລກປ່ຽນ ແລະ ຖອດຖອນບົດຮຽນເຊິ່ງກັນແລະກັນກ່ຽວກັບບາງບັນຫາທີ່ມີຄວາມສົນໃຈຕື່ມອີກ.

ໂອກາດດັ່ງກ່າວ, ຄະນະໄດ້ນຳເອົາເຄື່ອງອຸປະກອນການແພດທີ່ລະດົມ, ຂົນຂວາຍຈາກພາຍໃນ ແລະ ຕ່າງປະເທດ ປະກອບມີ: ຄອມພິວເຕີຕັ້ງໂຕະ, ເຄື່ອງວັດແທກອຸນຫະພູມ, ຕຽງຄົນເຈັບ, ຕຽງກວດຄົນເຈັບ, ໂຕະອຸປະກອນການແພດ, ລໍ້ບຳບັດ, ຜ້າປູບ່ອນ, ຊຸດພົມຢາງສີຟ້າ, ເຈວລ້າງມື ແລະ ຜ້າປົດປາກ ລວມມູນຄ່າ 260 ລ້ານກີບ ມອບໃຫ້ແຂວງວຽງຈັນ.

ຈາກນັ້ນ, ຍັງໄດ້ໄປຢ້ຽມຊົມສະຖານທີ່ທ່ອງທ່ຽວຫາດດອນກາງ ແລະ ໄຫວ້ພຣະຮັບສິນຖວາຍວັດຖຸປັດໄຈຈຳນວນໜຶ່ງທີ່ວັດສິນໄຊຍະຣາມ ບ້ານໂນນຫີນແຮ່ ດິນແດນອະລິຍະທຳ ແຫ່ງເມືອງເຟືອງ ແຂວງວຽງຈັນ.

(ພາບ: ນາງ ນິດຕາ ຄຸນປາກດີ
ຂ່າວ: ນາງ ປາກາລັກ ພົມມີໄຊ)

## ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ສ້າງຄວາມເຂັ້ມແຂງໃຫ້ພະນັກງານ ປະຈຳປີ 2022

(ສພຊ) ກອງປະຊຸມເຝິກອົບຮົມການຍົກລະດັບສ້າງຄວາມເຂັ້ມແຂງ ປະຈຳປີ 2022 ໃຫ້ພະນັກງານ-ລັດຖະກອນຂອງສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ແລະ ວິຊາການທີ່ຮັບຜິດຊອບວຽກງານຄົ້ນຄວ້າ ແລະ ສັງລວມເນື້ອໃນ ປະຈຳເຂດເລືອກຕັ້ງໃນທົ່ວປະທດ ໄດ້ຈັດຂຶ້ນໃນລະຫວ່າງວັນທີ 13-16 ມີນາ 2023 ທີ່ສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ປອ. ຢ່າງກູ້ ຢ່າງລືໄຊ ຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ; ມີທ່ານຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, ຄະນະກົມ, ຄະນະພະແນກ, ນັກວິທະຍາກອນ, ພະນັກງານ-ລັດຖະກອນພາຍໃນສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ ແລະ ເຂດເລືອກຕັ້ງທົ່ວປະເທດ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງໃນການຈັດເຝິກອົບຮົມຄັ້ງນີ້ ກໍເພື່ອຍົກລະດັບຄວາມຮູ້, ຄວາມສາມາດ ແລະ ສ້າງຄວາມເຂັ້ມແຂງ ໃຫ້ພະນັກງານ ມີຄວາມເຂັ້ມແຂງໃນການເຄື່ອນໄຫວວຽກງານດ້ານວິຊາການຄວາມຮັບຜິດຊອບໃຫ້ມີປະສິດທິຜົນຫຼາຍຂຶ້ນ ທັງເພື່ອຍົກສູງຄຸນນະພາບດ້ານວິຊາສະເພາະໃຫ້ແກ່ພະນັກງານ ໃນການເປັນເສນາທິການນັບມື້ນັບເຂັ້ມແຂງຂຶ້ນເທື່ອລະກ້າວ.

ກອງປະຊຸມ, ຜູ້ເຂົ້າຮ່ວມໄດ້ຮັບຟັງ ແລະ ຮຽນຮູ້ກ່ຽວກັບ 10 ຫົວຂໍ້ ຄື: ການສະເໜີຫົວຂໍ້ຄົ້ນຄວ້າວິທະຍາສາດ; ກຳນົດໝາຍການນຳໃຊ້ງົບປະມານກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ; ວິທີວິທະຍາໃນການເຮັດບົດຄົ້ນຄວ້າວິທະຍາສາດທາງສັງຄົມ; ຄວາມຮູ້ພື້ນຖານໃນການຄົ້ນຄວ້າຮ່າງກົດໝາຍ; ນຳສະເໜີພາບລວມກ່ຽວກັບລະບົບ G-Web Platform ແລະ ການອອກແບບ ແລະ ການຕິດຕັ້ງລະບົບເວັບເຊີເວີຈຳລອງ (Web Server), ເຊີເວີຖານຂໍ້ມູນ (Database Server) ໃນເຄື່ອງຈຳລອງ (Local Machine) ແລະ ເຄື່ອງເຊີເວີ ໃນລະບົບ Cloud; ການສ້າງການອອກແບບໂຄງ



ສ້າງ, ສ້າງເມນູຫຼັກ, ການສ້າງເມນູຍ່ອຍ ແລະ ບັນຈຸເນື້ອໃນ G-Web; ການບຳລຸງຮັກສາ ແລະ ການສຳເນົາຂໍ້ມູນ G-Web; ພື້ນຖານການທັນຫ້ອງສະໝຸດເປັນທັນສະໄໝ; ການຮ່ວມມືທາງດ້ານວິຊາການລະຫວ່າງຫ້ອງສະໝຸດໃນລາວ ແລະ ການສ້າງປຶ້ມຫຼັກສູດ, ຄູ່ມືຝຶກອົບຮົມ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ປະກອບຄຳຄິດຄຳເຫັນ ແລະ ສົນທະນາແລກປ່ຽນຮ່ວມກັນ.

(ນາງ ສຸພາວັນ ຫອມສະນິດ)

## ປະທານ...

(ຕໍ່ຈາກໜ້າ 1)

ທຶນ ແລະ ຄວາມເປັນແບບຢ່າງຂອງພະນັກງານ, ສະມາຊິກພັກ ແລະ ນັກຮົບ ໃຫ້ແກ່ມະຫາຊົນ, ໃຫ້ແກ່ສັງຄົມ, ໃຫ້ແກ່ປະຊາຊົນ ແລະ ປະດິດສ້າງ, ນຳພາປະຊາຊົນເຮັດຕົວຈິງໃຫ້ຫຼາຍ ເພື່ອປະຊາຊົນພົ້ນຈາກຄວາມທຸກຍາກ.

2. ສະເໜີໃຫ້ ຄະນະພັກ, ສະພາປະຊາຊົນແຂວງ, ອົງການປົກຄອງແຂວງ, ອົງການປົກຄອງທ້ອງຖິ່ນທຸກຂັ້ນ ຈົ່ງພ້ອມກັນຫັນທີ່ຕັ້ງຂອງແຂວງ ຈາກທີ່ຕັ້ງຍຸດທະສາດດ້ານການທະຫານ ມາເປັນທີ່ຕັ້ງຍຸດທະສາດທາງດ້ານເສດຖະກິດ ດ້ວຍການເພີ່ມທະວີການພົວພັນຮ່ວມມືກັບບັນດາແຂວງຂອງ ສປຈີນ, ບັນດາແຂວງຂອງ ສສ.ຫວຽດນາມ ໃນການສະໜອງຜົນຜະລິດດ້ານກະສິກຳ ແລະ ດ້ານອື່ນໆ ໃຫ້ແກ່ຕະຫຼາດຂອງສອງປະເທດ ເຊິ່ງເປັນຕະຫຼາດທີ່ໃຫຍ່ ແລະ ກວ້າງຂວາງ ຈະເຮັດໃຫ້ຜົນຜະລິດຂອງພໍ່ແມ່ປະຊາຊົນມີຕະຫຼາດຮອງຮັບ, ສາມາດສ້າງອາຊີບທີ່ໝັ້ນຄົງ, ມີລາຍຮັບ ແລະ ປັບປຸງຊີວິດການເປັນຢູ່ຂອງພໍ່ແມ່ປະຊາຊົນໃຫ້ດີຂຶ້ນຕື່ມ.

3. ຄະນະພັກ, ສະພາປະຊາຊົນແຂວງ, ອົງການປົກຄອງແຂວງ ຈະຕ້ອງໄດ້ເພີ່ມທະວີການພົວພັນຮ່ວມມືກັບອົງການປົກຄອງຂອງບັນດາແຂວງ ສອງປະເທດ ທີ່ມີຊາຍແດນຕິດຈອດກັບແຂວງຜົ້ງສາລີ ເພື່ອຜູກແໜ້ນການຮ່ວມມື, ສ້າງຄວາມເຊື່ອໝັ້ນ, ຄວາມໄວ້ເນື້ອເຊື່ອໃຈ ເຊິ່ງກັນແລະກັນ ໃຫ້ຫຼາຍຂຶ້ນ ເຊິ່ງຈະເປັນບ່ອນອີງໃຫ້ແກ່ການຮ່ວມມືທາງດ້ານເສດຖະກິດ ຂອງພາກລັດ ແລະ ພາກເອກະຊົນຂອງສອງຝ່າຍ ເພື່ອເລັ່ງພັດທະນາເສດຖະກິດ, ຍາດແຍ່ງເອົາທຶນຮອນ, ເຕັກນິກວິຊາການ ໂດຍສະເພາະດ້ານຜະລິດກະສິກຳ, ການປູກ, ການລ້ຽງ, ແນວພັນ ແລະ ເຕັກນິກວິຊາການທີ່ດີມາພັດທະນາດ້ານກະສິກຳຂອງເຮົາ ໃຫ້ມີປະສິດທິພາບ.

4. ຄະນະພັກ, ສະພາປະຊາຊົນແຂວງ ແລະ ອົງການປົກຄອງແຂວງຜົ້ງສາລີ ຈະຕ້ອງໄດ້ເອົາໃຈໃສ່ສຶກສາອົບຮົມໃຫ້ປະຊາຊົນບັນດາເຜົ່າ ມີຄວາມສາມັກຄີປອງດອງ, ມີນ້ຳໃຈຮັກຊາດ ແລະ ມີນ້ຳໃຈເສຍສະຫຼະ ເພື່ອຜົນປະໂຫຍດສ່ວນລວມ, ດຸໝັ່ນຂະຫຍັນພຽນ, ສ້າງສະຕິເຄົາລົບກົດໝາຍ, ການປະຕິບັດພັນທະຂອງປະຊາຊົນ ຕາມກົດໝາຍກຳນົດ. ພ້ອມກັນນັ້ນ, ກໍສ້າງເງື່ອນໄຂໃຫ້ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ໄດ້ເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງຕົນຕາມກົດໝາຍກຳນົດ ຢ່າງມີປະສິດທິພາບ.

5. ຄະນະພັກ, ອົງການປົກຄອງແຂວງ ຈະຕ້ອງໄດ້ເພີ່ມທະວີການນຳພາ, ສຶກສາອົບຮົມບົ່ມເພາະສອງກຳລັງ ຢ່າງໃກ້ສິດ, ເຖິງຖອງ; ເຝິກຝົນຫຼໍ່ຫຼອມໃຫ້ເປັນກຳລັງທີ່ຈົງຮັກພັກດີ, ຮັບໃຊ້ປະຊາຊົນ, ຮັບໃຊ້ປະເທດຊາດ ດ້ວຍຄວາມບໍລິສຸດຜ່ອງໃສ, ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ວຽກງານ; ການເຄື່ອນໄຫວປະຕິບັດໜ້າທີ່ວຽກງານ ຕ້ອງຢູ່ບົນຈິດໃຈຮັບໃຊ້ປະເທດຊາດ ແລະ ປະຊາຊົນ. ພ້ອມກັນນັ້ນ, ກໍຕ້ອງເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍ ແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ ຢ່າງທົ່ວເຖິງ ແລະ ເລິກເຊິ່ງ; ສ້າງ ແລະ ປັບປຸງຕາໜ່າງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢູ່ທ້ອງຖິ່ນຮາກຖານ ໃຫ້ເຂັ້ມແຂງ, ໜັກແໜ້ນ; ສະກັດກັ້ນອາດສະຍາກຳຕ່າງໆຢ່າງທັນການ, ເດັດຂາດ ແລະ ເຂັ້ມງວດ; ເອົາໃຈໃສ່ການຄຸ້ມຄອງຄົນຕ່າງປະເທດ ໃຫ້ເຂັ້ມງວດຕາມກົດໝາຍ.

6. ສະເໜີໃຫ້ ຄະນະພັກ, ສະພາປະຊາຊົນແຂວງ, ອົງການປົກຄອງແຂວງ ເພີ່ມທະວີການນຳພາ-ຊີ້ນຳອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ກໍຄື ພໍ່ແມ່ປະຊາຊົນ ໃຫ້ມີຄວາມເຂັ້ມງວດ ໃນການປົກປັກຮັກສາປ່າໄມ້ປົກຄຸມ, ສະກັດກັ້ນການຕັດໄມ້ທຳລາຍປ່າ ເຊິ່ງຈະສົ່ງຜົນກະທົບເຮັດໃຫ້ແມ່ນ້ຳ, ຫ້ວຍຮ່ອງ ເກີດການບົກແຫ້ງ, ສົ່ງຜົນກະທົບຕໍ່ຄວາມສົມດຸນຂອງລະບົບນິເວດ ແລະ ກະທົບຕໍ່ການຜະລິດ, ການດຳລົງຊີວິດຂອງປະຊາຊົນ. ຕາມຂໍ້ມູນແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ໄດ້ຍົກໃຫ້ເຫັນປ່າປົກຄຸມຂອງແຂວງເຮົາ ກວມເອົາ 65% ຂອງເນື້ອທີ່ທັງໝົດ ຖືວ່າເປັນການປົກປັກຮັກສາສິ່ງແວດລ້ອມທີ່ດີຫຼາຍ ແລະ ໃຫ້ສືບຕໍ່ຂະຫຍາຍປ່າປົກຄຸມໃຫ້ເພີ່ມຂຶ້ນ ເຊິ່ງຈະສ້າງເງື່ອນໄຂໃຫ້ເກີດຄວາມຊຸ່ມຊື່ນຂອງເນື້ອທີ່ດິນ ແລະ ຊີວະນາໆພັນຈະເລີນເຕີບໂຕດີ.

7. ສະເໜີໃຫ້ ຄະນະພັກ, ສະພາປະຊາຊົນແຂວງ, ອົງການປົກຄອງແຂວງ, ອົງການປົກຄອງທ້ອງຖິ່ນທຸກຂັ້ນ ຕິດຕາມ, ຊຸກຍູ້ ຂະແໜງການທີ່ກ່ຽວຂ້ອງຂອງແຂວງ ຄົ້ນຄວ້າວາງແຜນ ແລະ ຈັດແບ່ງເຂດການຜະລິດກະສິກຳໃຫ້ເໝາະສົມ, ຄົ້ນຄວ້າກຳນົດທ່າແຮງບົ່ມຊ້ອນທາງດ້ານການຜະລິດກະສິກຳຂອງແຂວງ ເພື່ອສຸມທຶນຮອນ, ເຕັກນິກວິຊາການ ເຂົ້າໃສ່ການຜະລິດເປັນສິນຄ້າຂອງປະຊາຊົນ ເພື່ອສ້າງອາຊີບ ແລະ ລາຍຮັບອັນໝັ້ນຄົງໃຫ້ພໍ່ແມ່ປະຊາຊົນ; ສົ່ງເສີມການຜະລິດກະສິກຳເປັນກຸ່ມ, ເປັນຟາມ, ສະຫະກອນແບບໃໝ່ ເພື່ອຂະຫຍາຍຖານການຜະລິດໃຫ້ກວ້າງໃຫຍ່ ແລະ ມີຜົນຜະລິດຈຳນວນຫຼາຍ, ມີທ່າແຮງໃນການເຂົ້າເຖິງແຫຼ່ງທຶນ ແລະ ການເຂົ້າເຖິງຕະຫຼາດທີ່ມີປະສິດທິພາບ.

8. ຄະນະພັກ, ສະພາປະຊາຊົນແຂວງ, ອົງການປົກຄອງແຂວງ ຈະຕ້ອງໄດ້ເອົາໃຈໃສ່ນຳພາຊີ້ນຳ ໃນການປົກປັກຮັກສາ, ພັດທະນາແຫຼ່ງທ່ອງທ່ຽວໃຫ້ຍືນຍົງ ແລະ ພັດທະນາຄຸນຄ່າຂອງແຫຼ່ງທ່ອງທ່ຽວໃຫ້ຄົງຢູ່ຍາວນານກັບປະເທດລາວເຮົາຕະຫຼອດໄປ.

9. ຄະນະພັກ, ສະພາປະຊາຊົນແຂວງ, ອົງການປົກຄອງແຂວງ ຈະຕ້ອງໄດ້ເອົາໃຈໃສ່ ລົງເລິກຕິດຕາມ, ຊຸກຍູ້ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດບັນດາຕົວຊີ້ວັດຕ່າງໆ ໄດ້ບັນລຸຕາມຄາດໝາຍນັບມື້ເພີ່ມຂຶ້ນ; ການພັດທະນາການສຶກສາຂອງຂະແໜງວິຊາສະເພາະດ້ານຕ່າງໆ ໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມ, ສາມາດສ້າງວຽກເຮັດງານທຳໃຫ້ແກ່ລູກຫຼານທີ່ຮຽນຈົບວິຊາສະເພາະຂະແໜງຕ່າງໆ ໃຫ້ມີວຽກເຮັດງານທຳ, ແກ້ໄຂການໄປອອກແຮງງານຢູ່ຕົວເມືອງໃຫຍ່ ຫຼື ຢູ່ປະເທດໃກ້ຄຽງ.

10. ວຽກງານການກໍ່ສ້າງຮາກຖານການເມືອງ: ການກໍ່ສ້າງຮາກຖານການເມືອງແມ່ນມີຄວາມສຳຄັນຫຼາຍ ສະນັ້ນ, ຄະນະພັກ, ສະພາປະຊາຊົນແຂວງ, ອົງການປົກຄອງແຂວງ ຈະຕ້ອງໄດ້ເພີ່ມທະວີຄວາມເອົາໃຈໃສ່ ວຽກງານການກໍ່ສ້າງຮາກຖານການເມືອງ, ລົງໃກ້ສິດຕິດແທດພໍ່ແມ່ປະຊາຊົນ, ຮັບຟັງຄຳສະເໜີ, ຄວາມຂັດຂ້ອງໝອງໃຈຂອງປະຊາຊົນ ຢ່າງເປັນປົກກະຕິ; ສ້າງເງື່ອນໄຂໃຫ້ພໍ່ແມ່ປະຊາຊົນໄດ້ປະກອບຄຳຄິດຄຳເຫັນຕໍ່ ການຄຸ້ມຄອງລັດ-ຄຸ້ມຄອງເສດຖະກິດ-ສັງຄົມ ເພື່ອເປັນຂໍ້ມູນໃນການປັບປຸງແກ້ໄຂ.

11. ການຈັດຕັ້ງປະຕິບັດ ວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ເປັນວຽກງານທີ່ມີຄວາມສຳຄັນ ຈຶ່ງສະເໜີໃຫ້ບັນດາສະຫາຍຄະນະພັກ, ສະພາປະຊາຊົນແຂວງ, ອົງການປົກຄອງແຂວງ ເພີ່ມທະວີການນຳພາ-ຊີ້ນຳຈັດຕັ້ງປະຕິບັດ ແລະ ຖືເອົາວາລະແຫ່ງຊາດ ເປັນພາລະກິດທົ່ວປວງຊົນ ເຊິ່ງສະມາຊິກພັກ, ພະນັກງານ-ລັດຖະກອນ ກໍຄືພໍ່ແມ່ປະຊາຊົນບັນດາເຜົ່າ ຈະຕ້ອງໄດ້ຮ່ວມແຮງຮ່ວມໃຈກັນຈັດຕັ້ງປະຕິບັດ.

12. ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ບັນຫາຢາເສບຕິດ ເປັນໄພອັນຕະລາຍຕໍ່ສັງຄົມ, ເປັນສາເຫດຂອງການເກີດອາດຊະຍາກຳປະເພດຕ່າງໆ. ສະນັ້ນ, ທຸກພາກສ່ວນໃນສັງຄົມ ຈະຕ້ອງໄດ້ພ້ອມກັນເຂົ້າຮ່ວມໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ, ບໍ່ປະໃຫ້ແຕ່ສອງກຳລັງເປັນຜູ້ຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ; ຖືເອົາການແກ້ໄຂບັນຫາຢາເສບຕິດ ຕິດພັນກັບວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ, ການສົ່ງເສີມການຜະລິດ, ສ້າງວຽກເຮັດງານທຳ, ການສ້າງລາຍໄດ້ແກ່ປະຊາຊົນ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ນັບມື້ດີຂຶ້ນ.

ໂອກາດດັ່ງກ່າວ, ຄະນະຍັງໄດ້ນຳເງິນ ຈຳນວນ 100 ລ້ານກີບ ມອບໃຫ້ອົງການປົກຄອງແຂວງຜົ້ງສາລີ.

## ຄະນະຜູ້ແທນ...

(ຕໍ່ຈາກໜ້າ 1)

(ສພຊ) ໂດຍຕອບສະໜອງຕາມການເຊື້ອເຊີນຂອງທ່ານ Duarte Pacheco ປະທານສະຫະພັນລັດຖະສະພາສາກົນ (IPU) ແລະ ເພື່ອເປັນການປະຕິບັດພັນທະຂອງສະພາແຫ່ງຊາດ ແຫ່ງ ສປປລາວ ໃນຖານະທີ່ເປັນສະມາຊິກຂອງ IPU, ໃນວັນທີ 10 ມີນາ 2023 ຄະນະຜູ້ແທນຂັ້ນສູງຂອງສະພາແຫ່ງຊາດ ນຳໂດຍທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ແຫ່ງ ສປປລາວ ພ້ອມດ້ວຍຄະນະ ໄດ້ເດີນທາງເຂົ້າຮ່ວມກອງປະຊຸມໃຫຍ່ສະຫະພັນລັດຖະສະພາສາກົນ (IPU) ຄັ້ງທີ 146 ທີ່ມານາມາ ປະເທດບາເຣນ. ກອງປະຊຸມດັ່ງກ່າວດຳເນີນໄປເປັນເວລາ 5 ວັນ, ນັບແຕ່ວັນທີ 11-15 ມີນາ 2023 ເຊິ່ງມີຄະນະຜູ້ແທນຈາກ 179 ປະເທດທົ່ວໂລກ ທີ່ເປັນສະມາຊິກ IPU ເຂົ້າຮ່ວມ.

ໃນການເຂົ້າຮ່ວມກອງປະຊຸມຄັ້ງນີ້, ທ່ານຮອງປະທານສະພາແຫ່ງຊາດ, ຫົວໜ້າຄະນະຜູ້ແທນລາວ ຈະໄດ້ຂຶ້ນກ່າວປາໄສຕໍ່ກອງປະຊຸມພາຍໃຕ້ຫົວຂໍ້: "ສົ່ງເສີມການຢູ່ຮ່ວມກັນຢ່າງສັນຕິ ແລະ ສັງຄົມທີ່ກວມລວມ: ຕ້ານທຸກການກະທຳທີ່ຂາດຄວາມອົດທົນອົດກັ້ນ". ພ້ອມດຽວກັນນັ້ນ, ຄະນະຜູ້ແທນສະພາແຫ່ງຊາດລາວ ຍັງຈະໄດ້ເຂົ້າຮ່ວມກອງປະຊຸມເຄືອຂ່າຍລັດຖະສະພາ ຂອງບັນດາປະເທດສະມາຊິກຂະບວນການບໍ່ຮ່ວມກຸ່ມ ຄັ້ງທີ 2 ແລະ ພົບປະສອງຝ່າຍກັບຄະນະຜູ້ແທນຈາກລັດຖະສະພາປະເທດເພື່ອນມິດ ແລະ ອົງການລັດຖະສະພາພາກພື້ນ ແລະ ສາກົນ ຈຳນວນໜຶ່ງ.

## ສສຊ...

(ຕໍ່ຈາກໜ້າ 1)

ພາແຫ່ງຊາດ ໄດ້ພົບປະຢ້ຽມຢາມ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ພະນັກງານ-ລັດຖະກອນຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ) ລວມຜູ້ເຂົ້າຮ່ວມທັງໝົດ 223 ຄົນ ຍິງ 112 ຄົນ.

ພາຍຫຼັງຮັບຟັງການລາຍງານໂດຍຫຍໍ້ກ່ຽວກັບການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານຂອງ ກຊສ ແລ້ວ, ບັນດາທ່ານ ສສຊ ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ II; ຈາກນັ້ນ, ກອງປະຊຸມ ໄດ້ເປີດໂອກາດໃຫ້ພະນັກງານ-ລັດຖະກອນຂອງກະຊວງ ໄດ້ມີການປະກອບຄຳເຫັນ ແລະ ຄຳຊັກຖາມ ພ້ອມທັງຄຳສະເໜີເພື່ອໃຫ້ ສສຊ ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ນຳໄປສະເໜີໃຫ້ພາກສ່ວນກ່ຽວຂ້ອງພິຈາລະນາ ເປັນຕົ້ນການສ້າງແຜນແມ່ບົດຈັດສັນນຳໃຊ້ທີ່ດິນຂັ້ນເມືອງ ແລະ ແຂວງ ເພື່ອເປັນພື້ນຖານໃນການອອກໃບຕາດິນ, ການແກ້ໄຂຂໍ້ຂັດແຍ່ງທີ່ດິນ ໃນໄລຍະຜ່ານມາ, ການປົກປັກຮັກສາສິ່ງແວດລ້ອມ ເຊັ່ນ: ຕົ້ນໄມ້ໃຫຍ່ທີ່ໃຫ້ຄວາມຮົ່ມເຢັນຕາມເສັ້ນທາງໃນນະຄອນຫຼວງວຽງຈັນ, ການແກ້ໄຂບັນຫາຄ່າຄອງຊີບ ໂດຍສະເພາະລາຄາສິນຄ້າອຸປະໂພກ-ບໍລິໂພກທີ່ຈຳເປັນ ແລະ ບັນຫາອື່ນໆ.

ພ້ອມດຽວກັນນັ້ນ, ສສຊ ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ກໍໄດ້ໃຫ້ຄວາມກະຈ່າງແຈ້ງຕໍ່ບາງບັນຫາ ແລະ ຈະນຳສະເໜີບັນຫາທີ່ຕິດພັນກັບພາກສ່ວນອື່ນ ເພື່ອພິຈາລະນາແກ້ໄຂ; ຈາກນັ້ນ, ທ່ານປະທານກອງປະຊຸມຍັງໄດ້ເນັ້ນຕື່ມກ່ຽວກັບການຈັດຕັ້ງປະຕິບັດຕາມຂອບສິດ ແລະ ໜ້າທີ່ຂອງກະຊວງ ໂດຍສະເພາະວຽກທີ່ຕິດພັນກັບການອອກໃບຕາດິນທີ່ຍັງເປັນວຽກທີ່ທ້າທາຍຂອງກະຊວງ ເຮັດແນວໃດໃຫ້ວຽກງານດັ່ງກ່າວ ສາມາດບັນລຸຕາມແຜນປີ ທີ່ໄດ້ກຳນົດໄວ້ໃນມະຕິຂອງກອງປະຊຸມສະພາແຫ່ງຊາດ.

## ສ້າງຄວາມ...

(ຕໍ່ຈາກໜ້າ 1)

ຂອງທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການວັດທະນະທຳ-ສັງຄົມ, ມີທ່ານ ບຸນລ້ອມ ແກ້ວບົວໂຮມ ຮອງປະທານກຳມາທິການ, ມີຄະນະກົມ, ຄະນະພະແນກ ແລະ ພະນັກງານ-ວິຊາການພາຍໃນກຳມາທິການເຂົ້າຮ່ວມຢ່າງພ້ອມພຽງ.

ທັງນີ້, ເພື່ອຍົກສູງລະດັບຄວາມຮັບຮູ້ການເມືອງ-ແນວຄິດ, ຄວາມຮັບຜິດຊອບການເມືອງໃຫ້ແກ່ພະນັກງານ-ລັດຖະກອນ ພາຍໃນກຳມາທິການໃຫ້ສູງຂຶ້ນກວ່າເກົ່າ; ສ້າງຄວາມຮັບຮູ້ເຂົ້າໃຈທີ່ເປັນເອກະພາບ ແລະ ຖືກຕ້ອງຕໍ່ພາລະບົດບາດ, ສິດໜ້າທີ່ຂອງກຳມາທິການ; ສ້າງຄວາມເຂັ້ມແຂງກ່ຽວກັບວຽກງານເສນາທິການຄົ້ນຄວ້າ, ວິເຄາະ, ວິໄຈ ແລະ ສັງລວມບັນຫາ, ການຂຽນເອກະສານ, ບົດປະເພດຕ່າງໆໃຫ້ແກ່ກຳມາທິການ, ສະມາຊິກສະພາແຫ່ງຊາດທີ່ເປັນກຳມະ ການຂອງກຳມາທິການ, ຄະນະປະຈຳສະພາແຫ່ງຊາດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ໃນກອງປະຊຸມ ຜູ້ເຂົ້າຮ່ວມ ໄດ້ຮັບຟັງ ແລະ ຮຽນຮູ້ກ່ຽວກັບມາລະຍາດ-ພິທີການ ສະເໜີໂດຍວິທະຍາກອນທີ່ມາຈາກກົມພິທີການທູດ ກະຊວງການຕ່າງປະເທດ; ການຄົ້ນຄວ້າວິທະຍາສາດ, ບັນຫາ, ການຄັດເລືອກ ແລະ ການຈັດບຸລິມະສິດຂອງບັນຫາສຳລັບຄົ້ນຄວ້າ ສະເໜີໂດຍວິທະຍາກອນທີ່ມາຈາກສະຖາບັນສາທາລະນະສຸກສາດ ແລະ ການແພດເຂດຮ້ອນ; ຈາກນັ້ນ, ບັນດາສຳມະນາກອນ ໄດ້ແບ່ງກຸ່ມເຝິກປະຕິບັດ, ສົນທະນາແລກປ່ຽນນຳກັນດ້ວຍບັນຍາກາດທີ່ຟົດຟື້ນ ແລະ ເຕັມໄປດ້ວຍຄວາມຮູ້.

## ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຢູ່ເມືອງໄຊທານີ



(ສພຊ) ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ II ຢູ່ບ້ານຫາດວຽງຄຳ ເມືອງໄຊທານີ ນະຄອນຫຼວງວຽງຈັນ ໃນວັນທີ 1 ມີນາ 2023 ນຳໂດຍທ່ານ ສາລະພົດ ສູນວໍລະວົງ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1, ຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມ ນະຄອນຫຼວງວຽງຈັນ, ມີທ່ານ ຄຳພູວັນ ລາດຊະຈັກ ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ II, ຮອງຫົວໜ້າຄະນະສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ປະຈຳເຂດເລືອກຕັ້ງເມືອງ, ຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງໄຊທານີ, ມີບັນດາອົງການຈັດຕັ້ງບ້ານ ພ້ອມດ້ວຍຜູ້ມີສິດເລືອກຕັ້ງພາຍໃນບ້ານ ກໍໄດ້ເຂົ້າຮ່ວມຢ່າງພ້ອມພຽງ.

ໃນການເຄື່ອນໄຫວຄັ້ງນີ້, ບັນດາສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ໄດ້ຜັດປ່ຽນກັນນຳສະເໜີເນື້ອໃນທີ່ສຳຄັນຕ່າງໆທີ່ຖືກຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາໃນກອງປະຊຸມດັ່ງກ່າວ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ເພື່ອເປັນການຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ມະຕິກອງປະຊຸມຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ ໃຫ້ຖັນແຖວພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ປະຊາຊົນຜູ້ມີສິດເລືອກຕັ້ງ ໄດ້ເຊື່ອມຊຶມ, ຮັບຮູ້ເຂົ້າໃຈຢ່າງກວ້າງຂວາງ ແລະ ທົ່ວເຖິງ ທັງເປັນການພົບປະຜູ້ມີສິດເລືອກຕັ້ງ ເພື່ອນຳເອົາຄຳສະເໜີຄວາມຂັດຂ້ອງໝອງໃຈຂອງພໍ່ແມ່ປະຊາຊົນ ໄປຊຸກຍູ້ໃຫ້ພາກສ່ວນກ່ຽວຂ້ອງຄົ້ນຄວ້າຫາວິທີການແກ້ໄຂໃຫ້ຜູ້ມີສິດເລືອກຕັ້ງມີຄວາມກະຈ່າງແຈ້ງຕໍ່ບັນຫາຕ່າງໆ.

## ພົບປະຜູ້ມີສິດເລືອກຕັ້ງຢູ່ແຂວງຫຼວງນ້ຳທາ

(ສພຊ) ພາຍຫຼັງສຳເລັດການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງຫຼວງນ້ຳທາ ບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງຫຼວງນ້ຳທາ ກໍໄດ້ຈັດແບ່ງກັນເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງຕ່າງໆ ຢູ່ບັນດາເມືອງຕ່າງໆຂອງແຂວງຫຼວງນ້ຳທາ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງທັງສອງກອງປະຊຸມດັ່ງກ່າວ ເຊັ່ນ ຄະນະທີ່ນຳພາໂດຍທ່ານ ພົຈວ. ປອ. ວັນທອນ ສຸລິສັກ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 3 ແຂວງຫຼວງນ້ຳທາ, ຮອງຫົວໜ້າກົມໃຫຍ່ສັນຕິບານ ກະຊວງປ້ອງກັນຄວາມສະຫງົບ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຢູ່ສະໂມສອນຂອງເມືອງສິງ ແຂວງຫຼວງນ້ຳທາ, ຢູ່ສະໂມສອນຂອງກອງພົນ 419 ເມືອງສິງ ແຂວງຫຼວງນ້ຳທາ ແລະ ຢູ່ສະໂມສອນຂອງກອງບັນຊາການປ້ອງກັນຄວາມສະຫງົບ ແຂວງຫຼວງນ້ຳທາ ໃນລະຫວ່າງວັນທີ 20-21 ກຸມພາ ຜ່ານມາ ເຊິ່ງມີຄະນະປະຈຳພັກເມືອງ, ກຳມະການພັກເມືອງ, ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າຫ້ອງການ, 2 ກອງບັນຊາການ ປກຊ-ປກສ, ອະດີດການນຳຂອງເມືອງ, ເລຂາຄະນະພັກຮາກຖານກຸ່ມບ້ານ, ຫົວໜ້າ-ຮອງຫົວໜ້າໜ່ວຍງານ ແລະ ພະນັກງານວິຊາການເຂົ້າຮ່ວມຢ່າງພ້ອມພຽງ.

ໃນໂອກາດນີ້, ທ່ານ ພົຈວ. ປອ. ວັນທອນ ສຸລິສັກ ໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງກອງປະຊຸມໄດ້ພິຈາລະນາຮັບຮອງເອົາ 8 ບັນຫາສຳຄັນຂອງຊາດຄື: ພິຈາລະນາ, ຮັບຮອງເອົາບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2022; ພິຈາລະນາ, ຮັບຮອງເອົາມາດຕະການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2023 ມີທັງໝົດ 12 ແຜນວຽກຈຸດສຸມ ແລະ 4 ມາດຕະການ ຕາມການສະເໜີຂອງລັດຖະບານ; ກອງປະຊຸມຍັງໄດ້ຮັບຮອງເອົາແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປະຈຳປີ 2023 ຕາມການລາຍງານຂອງລັດຖະບານ ແລະ ການສະເໜີຂອງກອງປະຊຸມ; ພິຈາລະນາ, ຮັບຮອງເອົາບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2022 ຂອງອົງການກວດສອບແຫ່ງລັດ; 5 ພິຈາລະນາ, ຮັບຮອງເອົາບົດລາຍງານ ຂອງອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການເຄື່ອນໄຫວວຽກງານ ປະຈຳປີ 2022; ພິຈາລະນາ, ຮັບຮອງເອົາບົດລາຍງານ ຂອງສານປະຊາຊົນສູງສຸດ ກ່ຽວກັບການເຄື່ອນໄຫວວຽກງານ ປະຈຳປີ 2022; ພິຈາລະນາ, ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ຂອງສະພາແຫ່ງຊາດ; ພິຈາລະນາ, ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ ຈຳນວນ 12 ສະບັບ, ກົດໝາຍສ້າງໃໝ່ 3 ສະບັບ ແລະກົດໝາຍປັບປຸງ 9 ສະບັບ.



ພ້ອມດຽວກັນ, ທ່ານ ຈັນທະສຸລິນ ໝັ້ນປະດິດ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ທັງເປັນປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ສະພາປະຊາຊົນແຂວງ ໄດ້ຂຶ້ນຜ່ານເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ເຊິ່ງກອງປະຊຸມໄດ້ພິຈາລະນາ, ຮັບຮອງເອົາ 6 ບັນຫາສຳຄັນຂອງແຂວງຄື: ພິຈາລະນາຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2022 ແລະ ພິຈາລະນາຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2022; ພິຈາລະນາຮັບຮອງເອົາບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານ ປະຈຳປີ 2022 ແລະ ແຜນງົບປະມານແຫ່ງລັດ ປະຈຳປີ 2023 ຕາມການສະເໜີຂອງອົງການປົກຄອງແຂວງ; ພິຈາລະນາຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານອົງການກວດສອບປະຈຳພາກເໜືອປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວປະຈຳປີ 2023; ກອງປະຊຸມໄດ້ຮັບຮອງເອົາຜົນການກວດສອບບົດສະຫຼຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2021; ພິຈາລະນາຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2022 ຂອງອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ; ພິຈາລະນາຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນເຄື່ອນໄຫວວຽກງານ ປະຈຳປີ 2022 ຂອງສະພາປະຊາຊົນແຂວງຫຼວງນ້ຳທາ ຊຸດທີ II; ພິຈາລະນາ ຮັບຮອງເອົາຂໍ້ຕົກລົງຂອງເຈົ້າແຂວງ ຈຳນວນ 3 ສະບັບຄື: ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ແຂວງຫຼວງນ້ຳທາ; ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ແລະ ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງວຽກງານໄປສະນີ ພາຍໃນແຂວງຫຼວງນ້ຳທາ; ນອກນັ້ນ, ຜູ້ແທນກອງປະຊຸມຍັງໄດ້ສະເໜີບັນຫາທີ່ພົບຄວາມຫຍຸ້ງຍາກພາຍໃນແຂວງ, ເມືອງ ແລະ ບ້ານຢ່າງເປັນຂະບວນຟົດຟື້ນ ເພື່ອໃຫ້ຂັ້ນເທິງ ແລະ ພາກສ່ວນກ່ຽວຂ້ອງຄົ້ນຄວ້າແກ້ໄຂ ຕາມຄວາມເໝາະສົມ ແລະ ທ່ວງທັນກັບເວລາ.

## ປະທານສະພາປະຊາຊົນແຂວງອຸດົມໄຊ ພົບປະຜູ້ມີສິດເລືອກຕັ້ງ ຢູ່ເມືອງປາກແບງ



(ສພຊ) ໃນລະຫວ່າງວັນທີ 6-9 ມີນາ 2023 ທ່ານ ຄຳດີ ວົງລ້ອມ ສະມາຊິກສະພາແຫ່ງຊາດ ຊຸດທີ IX ປະຈຳເຂດເລືອກຕັ້ງທີ່ 4, ປະທານສະພາປະຊາຊົນແຂວງອຸດົມໄຊ ແລະ ທ່ານ ສົມເພັດ ເຜົ່າສຸພັນ ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງປາກແບງ ໄດ້ເຄື່ອນໄຫວພົບປະປະຊາຊົນຜູ້ມີສິດເລືອກຕັ້ງຢູ່ບ້ານມົກຄະ, ແກ້ງແລະ, ແຕງສາ, ໂຮມໄຊ, ລວງໂຕ່ງ, ກິ່ວຄຸຍ, ຫ້ວຍເລົ່າ, ດອນແຈ້ງ, ຫ້ວຍກະ ແລະ ບ້ານດອນສະອາດ ມີນາຍບ້ານ, ອົງການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນເຂົ້າຮ່ວມທັງໝົດ 841 ທ່ານ ຍິງ 318 ທ່ານ.

ໃນພິທີ, ນາຍບ້ານແຕ່ລະບ້ານ ໄດ້ລາຍງານໂດຍຫຍໍ້ກ່ຽວກັບທີ່ຕັ້ງ, ຈຸດພິເສດ, ລາຍຮັບຂອງບ້ານຕົນ ແລະ ຫາອື່ນໆພ້ອມທັງໄດ້ມີຄຳຄິດເຫັນ ແລະ ຄຳສະເໜີຕໍ່ການພັດທະນາພື້ນຖານໂຄງລ່າງດ້ານຕ່າງໆຂອງລັດແຕ່ລະຂັ້ນ.

ຈາກນັ້ນ, ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ໄດ້ຜັດປ່ຽນກັນນຳເອົາເນື້ອໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ຂອງສະພາສະພາປະຊາຊົນແຂວງ ຊຸດທີ II ເຜີຍແຜ່ໃຫ້ປະຊາຊົນໄດ້ຮັບຟັງ, ເພື່ອໃຫ້ຮັບຮູ້ ແລະ ເຂົ້າໃຈວ່າ 2 ກອງປະຊຸມດັ່ງກ່າວ ໄດ້ພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ຂອງແຂວງແນວໃດ ເປັນຕົ້ນແມ່ນກອງປະຊຸມໄດ້ຮັບຮອງເອົາ ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຜນງົບປະມານແຫ່ງລັດ ປະຈຳປີ 2022 ແລະ ທິດທາງແຜນການປະຈຳປີ 2023; ບົດລາຍງານການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ປະຈຳປີ 2022 ແລະ ທິດທາງແຜນການປະຈຳປີ 2023; ຮັບຮອງເອົາການແຕ່ງຕັ້ງທ່ານ ສອນໄຊ ສີພັນດອນ ເປັນນາຍົກລັດຖະມົນຕີແຫ່ງ ສປປລາວ ຜູ້ໃໝ່ ແລະ ກອງປະຊຸມສະພາປະຊົນແຂວງ ໄດ້ພິຈາລະນາຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ, ພິຈາລະນາ ແລະ ຮັບຮອງເອົາການສ້າງນິຕິກຳຂອງອົງການປົກຄອງແຂວງຈຳນວນ 4 ສະບັບ ແລະ ຮັບຮອງເອົາການສະເໜີແຕ່ງຕັ້ງຫົວໜ້າພະແນກ, ອົງການ ຈຳນວນໜຶ່ງ ແລະ ບັນຫາສຳຄັນອື່ນໆ.

ພ້ອມນັ້ນ, ບັນດາທ່ານສະມາຊິກສະພາແຫ່ງຊາດ, ສະພາປະຊາຊົນແຂວງ ໄດ້ຊີ້ແຈງຕໍ່ກັບບັນດາຄຳສະເໜີຂອງປະຊາຊົນ, ສ່ວນບາງບັນຫາທີ່ບໍ່ທັນກະຈ່າງແຈ້ງແມ່ນຈະໄດ້ນຳໄປຄົ້ນຄວ້າໃນກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ ແລະ ສົ່ງໃຫ້ພະແນກການ, ອົງການທີ່ກ່ຽວຂ້ອງຄົ້ນຄວ້າພິຈາລະນາ ແລະ ແກ້ໄຂ ຕາມພາລະບົດບາດ.

(ແສງພອນ ອິນນະລົງ)

# ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງບໍ່ແກ້ວ




(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງບໍ່ແກ້ວ ຊຸດທີ II ໄດ້ໄຂຂຶ້ນ ແລະ ອັດລົງດ້ວຍຜົນສຳເລັດຢ່າງເປັນທາງການ ໃນລະຫວ່າງວັນທີ 21-22 ກຸມພາ 2023 ໂດຍການເປັນປະທານຂອງທ່ານ ຈອມສີ ລັດຕະນະປັນ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ; ເຂົ້າຮ່ວມມີທ່ານ ປອ. ບົວຄົງ ນາມມະວົງ ເລຂາພັກແຂວງ, ເຈົ້າແຂວງ ແຂວງບໍ່ແກ້ວ, ມີສະມາຊິກສະພາປະຊາຊົນແຂວງ ບັນດາການນຳພັກ-ລັດ, ອະດີດການນຳແຂວງ, ຫົວໜ້າພະແນກການ, ອົງການທຽບເທົ່າ, ອົງການກວດສອບພາກເໜືອ, ອົງການຈັດຕັ້ງມະຫາຊົນ, ລັດວິສາຫາກິດພາກລັດ-ເອກກະຊົນເຂົ້າຮ່ວມ.

ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງບໍ່ແກ້ວ ຊຸດທີ II ໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງແຂວງ ຄື: ຮັບຮອງເອົາການສະເໜີແຕ່ງຕັ້ງຫົວໜ້າພະແນກການຕ່າງປະເທດແຂວງ ຕາມການພິຈາລະນາສະເໜີຂອງເຈົ້າແຂວງ ແຂວງບໍ່ແກ້ວ; ພິຈາລະນາຮັບຮອງເອົາບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງແຂວງ; ພິຈາລະນາຮັບຮອງເອົາບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ບັນຫາຢາເສບຕິດ ປະຈຳປີ 2002 ແລະ ທິດທາງແຜນການ ປະຈຳປີ 2023 ຂອງແຂວງ; ຮັບຟັງການລາຍງານ ກ່ຽວກັບບັນຫາທີ່ສັງຄົມໃຫ້ຄວາມສົນໃຈ ຈຳນວນ 4 ພາກສ່ວນ ເປັນຕົ້ນແມ່ນບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ປະຈຳປີ 2022 ແລະ ວິທີການ, ມາດຕະການແກ້ໄຂ ປະຈຳປີ 2023; ບົດລາຍງານກ່ຽວກັບການແກ້ໄຂປາກົດການຫຍໍ້ທໍ້ໃນສັງຄົມ (ບັນຫາລັກຊັບ, ສໍ້ໂກງຊັບພົນລະເມືອງ ແລະ ອຸບັດເຫດຕາມທ້ອງຖະໜົນ) ປະຈຳປີ 2022 ແລະ ວິທີການມາດຕະການແກ້ໄຂປະຈຳປີ 2023; ບົດລາຍງານກ່ຽວກັບການສ້າງວິຊາຊີບ, ການພັດທະນາສີມືແຮງງານ ແລະ ວຽກເຮັດງານທຳໃຫ້ປະຊາຊົນ ເພື່ອແກ້ໄຂບັນຫາການວ່າງງານ ປະຈຳປີ 2022 ແລະ ວິທີການ, ມາດຕະການແກ້ໄຂ ປະຈຳປີ 2023; ວຽກງານ 6 ກວ່າບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວ ປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວ ປະຈຳປີ 2024 ຂອງຄະນະຄຸ້ມຄອງເຂດເສດຖະກິດພິເສດແຂວງ. ພິຈາລະນາຮັບຮອງເອົາຮ່າງຂໍ້ຕົກລົງຂອງທ່ານເຈົ້າແຂວງ ຈຳນວນ 3 ສະບັບ ເປັນຕົ້ນແມ່ນ ຮ່າງຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການສ້າງເມືອງຫ້ວຍຊາຍສະອາດ (ສໍສະອາດ) ສະບັບສ້າງໃໝ່; ຮ່າງຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍກອງທຶນສົ່ງເສີມ ແລະ ພັດທະນາວຽກງານກິລາ-ກາຍະກຳແຂວງບໍ່ແກ້ວ (ສ້າງໃໝ່); ຮ່າງຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການຄຸ້ມຄອງ ແລະ ປະຕິບັດມາດຕະການຕໍ່ຜູ້ລະເມີນລະບຽບກົດໝາຍ ໃນຂົງເຂດກະສິກຳ ແລະ ປ່າໄມ້ແຂວງບໍ່ແກ້ວ (ສ້າງໃໝ່); ພິຈາລະນາຮັບຮອງເອົາບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງອົງການກວດສອບປະຈຳພາກເໜືອ, ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2021; ພິຈາລະນາ, ຮັບຮອງເອົາບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງອົງການກວດກາລັດແຂວງ; ບົດລາຍງານຜົນການກວດກາຕາມຜົນການກວດສອບ ປະຈຳປີ 2020; ພິຈາລະນາ, ຮັບຮອງເອົາບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2002 ແລະ ທິດທາງແຜນການເຄື່ອນໄຫວ ປະຈຳປີ 2023 ຂອງສານປະຊາຊົນແຂວງ ແລະ ອົງການໄອຍະການປະຊາຊົນແຂວງບໍ່ແກ້ວ; ພິຈາລະນາ, ຮັບຮອງເອົາບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງສະພາປະຊາຊົນແຂວງບໍ່ແກ້ວ ຊຸດທີ II.

ນອກຈາກນັ້ນ, ກອງປະຊຸມຍັງໄດ້ຮັບຟັງການປະກອບຄຳເຫັນຈາກຄະນະປະຈຳສະພາປະຊາຊົນແຂວງ ຕໍ່ບົດລາຍງານຕ່າງໆ ແລະ ຮັບຟັງການຊີ້ແຈງຂອງພາກສ່ວນທີ່ກ່ຽວຂ້ອງຈຳນວນໜຶ່ງ ຕໍ່ຄຳຊັກຖາມຂອງບັນດາທ່ານສະມາຊິກສະພາປະຊາຊົນແຂວງ.

ທ່ານ ປອ. ບົວຄົງ ນາມມະວົງ ເຈົ້າແຂວງງບໍ່ແກ້ວ ໄດ້ລາຍງານຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງ ປະຈຳປີ 2022 ແລະ ວຽກງານຈຸດສຸມ ປະຈຳປີ 2003 ຂອງແຂວງ ຕະຫຼອດໄລຍະ 1 ປີ ຜ່ານມາ ໂດຍສັງເຂບ ເຊິ່ງທົ່ວແຂວງບໍ່ແກ້ວ ສາມາດເຮັດໃຫ້ສັງຄົມມີຄວາມສະຫງົບ, ປອດໄພ ແລະ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ການພັດທະນາເສດຖະກິດ-ສັງຄົມ ເຖິງແມ່ນວ່າໄດ້ຮັບຜົນກະທົບໂດຍກົງ ຈາກການແຜ່ລະບາດຂອງພະຍາດໂຄວິດ-19 ບວກໃສ່ກັບສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ, ບັນຫາລາຄານ້ຳມັນແພງ ແລະ ລາຄາສິນຄ້າມີການເໜັງຕີງ ແລະ ອັດຕາເງິນເຟີ້ສູງ ເຊິ່ງເປັນອຸປະສັກໃນການພັດທະນາເສດຖະກິດ-ສັງຄົມໂດຍທາງກົງ ແລະ ທາງອ້ອມທີ່ເຮັດໃຫ້ການຈັດຕັ້ງປະຕິບັດບັນດາຄາດໝາຍສູ້ຊົນຂອງວຽກງານຕ່າງໆພົບຄວາມຫຍຸ້ງຍາກພໍສົມຄວນ ແຕ່ພາຍໃຕ້ການນຳພາ-ຊີ້ນຳຂອງອົງຄະນະພັກ, ອົງການປົກຄອງທຸກຂັ້ນ ແລະ ຂະແໜງການທີ່ກ່ຽວຂ້ອງ ໄດ້ຊີ້ນຳຊຸກຍູ້ຕາມຂົງເຂດວຽກງານວິຊາສະເພາະຂອງຕົນດ້ວຍຄວາມເປັນເຈົ້າການ ແລະ ຄວາມຮັບຜິດຊອບສູງ ຈຶ່ງເຮັດໃຫ້ວຽກງານນັ້ນໄດ້ດຳເນີນໄປຕາມທິດທີ່ກຳນົດໄວ້ ເຊິ່ງມີຫຼາຍດ້ານພົ້ນເດັ່ນ ເປັນຕົ້ນແມ່ນເສດຖະກິດຂະຫຍາຍຕົວໃນລະດັບ 3,3% (ມະຕິສະພາ 5,1%) ຍັງບໍ່ບັນລຸ 1,8%, ລວມຍອດຜະລິດຕະພັນພາຍໃນ GDP 3.545,41 ຕື້ກີບ ທຽບໃສ່ (ມະຕິສະພາ 3.605,58 ຕື້ກີບ) ປະຕິບັດໄດ້ 98,33%, ສະເລ່ຍລາຍຮັບຕໍ່ຫົວຄົນ ປະຕິບັດໄດ້ 1.010,66 ໂດລາສະຫະລັດ/ຄົນ/ປີ ຂະແໜງກະສິກຳ-ປ່າໄມ້: 1.312,38 ຕື້ກີບ, ກວມ 37,02% ຂອງ GDP ຂະຫຍາຍຕົວ 3,5% (ມະຕິສະພາ 5,3%) ຂະແໜງອຸດສາຫະກຳ: 709,38 ຕື້ກີບ, ກວມ 20,01% ຂອງ GDP ຂະຫຍາຍຕົວ 3,1% (ມະຕິສະພາ 5,1%) ຂະແໜງການບໍລິການ: 1.523,65 ຕື້ກີບ, ກວມ 42,98% ຂອງ GDP ຂະຫຍາຍຕົວ 3,4% (ມະຕິສະພາ 5,0%) ການຈັດຕັ້ງປະຕິບັດການຈັດເກັບລາຍຮັບເຂົ້າງົບປະມານ (ຮອດວັນທີ 30 ທັນວາ 2022) ລວມທັງສູນກາງ ແລະ ທ້ອງຖິ່ນ ໄດ້ 435,78 ຕື້ກີບ ເທົ່າກັບ 99,12% ຂອງແຜນການປີ ທຽບໃສ່ປີຜ່ານມາເພີ້ມຂຶ້ນ 29,60% ໃນນີ້, ລາຍຮັບຂອງສູນກາງ ປະຕິບັດໄດ້ 281,99 ຕື້ກີບ ເທົ່າກັບ 95,53% ຂອງແຜນການປີ, ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ້ມຂຶ້ນ 40,85% ແລະ ລາຍຮັບຂອງແຂວງປະຕິບັດໄດ້ 153,78 ຕື້ກີບ ເທົ່າກັບ 106,46% ຂອງແຜນການປີ, ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ້ມຂຶ້ນ 12,14%. ການຄຸ້ມຄອງລາຍຈ່າຍ ປະຕິບັດໄດ້ 298,53 ຕື້ກີບ ເທົ່າກັບ 99,09% ຂອງແຜນການປີ, ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 4,06%. ໃນປີ 2022 ແຂວງບໍ່ແກ້ວ ໄດ້ຮັບໂຄງການລົງທຶນຂອງລັດຈຳນວນ 118 ໂຄງການ ມູນຄ່າ 26,66 ຕື້ກີບ, ຊຳລະເງິນຕົວຈິ່ງຜ່ານຄັງເງິນປະຕິບັດໄດ້ 100% ໃນນີ້, ມີ 114 ໂຄງການທີ່ຈັດຕັ້ງປະຕິບັດໜ້າວຽກສຳເລັດ 100% ແລະ ມີ 4 ໂຄງການທີ່ພວມດຳເນີນການຈັດຕັ້ງປະຕິບັດ.

ຜູ້ແທນກອງປະຊຸມໄດ້ປະກອບຄຳເຫັນຫຼາຍດ້ານໃນການແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ທີ່ໄດ້ສົ່ງຜົນກະທົບໂດຍກົງຕໍ່ ສປປລາວ ລວມທັງແຂວງບໍ່ແກ້ວຂອງພວກເຮົາ ເຮັດໃຫ້ການຄຸ້ມຄອງເສດຖະກິດ-ສັງຄົມພົບຫຼາຍສິ່ງທ້າທາຍໃໝ່ ເປັນຕົ້ນແມ່ນອັດຕາແລກປ່ຽນເໜັງຕີງແຮງ, ລາຄານ້ຳມັນເຊື້ອໄຟ ແລະ ສິນຄ້າເພີ່ມສູງຂຶ້ນ, ຊີວິດການເປັນຢູ່ຂອງປະຊາຊົນມີຄວາມຝືດເຄືອງ ແຕ່ດ້ວຍຄວາມເອົາໃຈໃສ່ນຳພາ-ຊີ້ນຳຂອງຄະນະບໍລິຫານງານພັກແຂວງ, ການປະສານສົມທົບ, ການປຶກສາຫາລືຮ່ວມກັນຢ່າງໃກ້ຊິດ ລະຫວ່າງສະພາປະຊາຊົນແຂວງ ແລະ ອົງການປົກຄອງແຂວງ, ຄວາມເຂົ້າໃຈຂອງພັກ-ລັດ ກໍຄືປະຊາຊົນລາວບັນດາເຜົ່າ ຈຶ່ງເຮັດໃຫ້ບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນຂອງແຂວງພວກເຮົາ ໄດ້ຮັບການແກ້ໄຂໃຫ້ເບົາບາງລົງເປັນກ້າວໆ; ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີມີຄາດໝາຍຈຳນວນໜຶ່ງບັນລຸໄດ້ຕາມແຜນການ, ການຈັດເກັບລາຍຮັບເຂົ້າງົບປະມານ ໝົດປີສາມາດບັນລຸຕາມແຜນກຳນົດຈຳນວນໜຶ່ງ ເຮັດໃຫ້ແຂວງຍັງສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບໂດຍພື້ນຖານ, ສາມາດປະຄັບປະຄອງເສດຖະກິດບໍ່ໃຫ້ຕົກໃນສະພາບຫຍຸ້ງຍາກກວ່ານີ້ ແລະ ຮັບປະກັນໃຫ້ສືບຕໍ່ມີການຂະຫຍາຍຕົວ, ແນວທາງການຕ່າງປະເທດໄດ້ຮັບການຈັດຕັ້ງຜັນຂະຫຍາຍຢ່າງເລິກເຊິ່ງແລະກວ້າງຂວາງ ເຊິ່ງເຮັດໃຫ້ບັນດາປະເທດໃກ້ ຄຽງ ໄດ້ມີການແລກປ່ຽນບົດຮຽນເຊິ່ງກັນແລະກັນຢ່າງຕໍ່ເນື່ອງ.



# ຮອງປະທານສະພາແຂວງ ເຮັດວຽກຢູ່ 2 ເມືອງຂອງແຂວງຫຼວງພະບາງ



(ສພຊ) ທ່ານ ສິມພອນ ສີອຸດົມພັນ ຮອງປະທານສະພາປະຊາຊົນແຂວງຫຼວງພະບາງ ໄດ້ເຄື່ອນໄຫວເຮັດວຽກຢູ່ 2 ເມືອງຂອງແຂວງຫຼວງພະບາງ ຄື: ທ່ານໄດ້ເຂົ້າຮ່ວມເປັນປະທານກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດວຽກງານ ປີ 2022 ແລະ ທິດທາງແຜນການ ປີ 2023 ຂອງຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງນ້ຳບາກ ໃນວັນທີ 27 ກຸມພາ 2023 ໂດຍການເປັນປະທານຮ່ວມຂອງທ່ານ ທຸມເພັງ ໂທທິທຳ ຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງນ້ຳບາກ; ເຂົ້າຮ່ວມມີ ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າຫ້ອງການ-ອົງການທຽບເທົ່າຂັ້ນເມືອງ.

ກອງປະຊຸມໄດ້ຮັບຟັງການລາຍງານຈາກທ່ານບຸນທັນ ສີລິລັດ ສະມາຊິກສະພາປະຊາຊົນແຂວງ ກ່ຽວກັບການເຄື່ອນໄຫວວຽກງານ ປີ 2022 ແລະ ທິດທາງແຜນການ ປີ 2023 ຂອງຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງນ້ຳບາກ ເຊິ່ງສະແດງໃຫ້ເຫັນການຈັດຕັ້ງປະຕິບັດພາລະບົດບາດຂອງສະພາປະຊາຊົນແຂວງຢູ່ຂັ້ນເມືອງ, ການພົບປະ ແລະ ໃຫ້ຄຳປຶກສາແກ່ຜູ້ມີສິດເລືອກຕັ້ງ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານຊ່ອຍວຽກ.

ໃນຕອນທ້າຍກອງປະຊຸມ, ທ່ານ ສິມພອນ ສີອຸດົມພັນ ໄດ້ມີຄຳເຫັນຍ້ອງຍໍຊົມເຊີຍຕໍ່ກັບຜົນງານທີ່ຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງນ້ຳບາກ ຍາດມາໄດ້ໃນໄລຍະ 1 ປີນີ້, ຄຽງຄູ່ກັນນັ້ນ ກໍໃຫ້ຍົກສູງຄວາມຮັບຜິດຊອບທາງດ້ານການເມືອງ ເພື່ອຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາປະຊາຊົນແຂວງທີ່ກຳນົດໄວ້ໃນກົດໝາຍ ໃຫ້ມີປະສິດທິພາບສູງ ໂດຍສະເພາະການໂຄສະນາເຜີຍແຜ່ໃຫ້ແກ່ຜູ້ມີສິດເລືອກຕັ້ງ ໃຫ້ມີຄວາມເຂົ້າໃຈຢ່າງເລິກເຊິ່ງ ແລະ ກວ້າງຂວາງ.

ຕອນແລງວັນດຽວກັນ, ທ່ານ ສິມພອນ ສີອຸດົມພັນ ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງ 2 ທ່ານ, ກໍໄດ້ນຳເອົາວັດຖຸປັດໄຈ (ຜ້າຫົ່ມ) ມອບໃຫ້ໂຮງຮຽນສາມັນກິນນອນຊົນເຜົ່າເມືອງນ້ຳບາກ ຈຳນວນ 165 ຜືນ, ລວມມູນຄ່າ 10,85 ລ້ານກີບ ຕາງໜ້າຮັບໂດຍທ່ານສິມພອນສິດທິພອນ ອຳນວຍການໂຮງຮຽນສາມັນກິນນອນຊົນເຜົ່າເມືອງນ້ຳບາກ ເພື່ອແຈກຢາຍໃຫ້ແກ່ນັກຮຽນຜູ້ທີ່ທຸກຍາກ ແລະ ຍັງຂາດເຂີນເຄື່ອງອຸປະໂພກດັ່ງກ່າວ.

ຈາກນັ້ນ, ໃນວັນທີ 6 ມີນາ 2023 ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງນານ ໄດ້ຈັດກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດວຽກງານ ປີ 2022 ແລະ ທິດທາງແຜນການ ປີ 2023 ຂອງຕົນ ເຊິ່ງທ່ານ ສິມພອນ ສີອຸດົມພັນ ຮອງປະທານສະພາປະຊາຊົນແຂວງ ກໍໄດ້ເຂົ້າຮ່ວມເປັນປະທານຮ່ວມກັບທ່ານ ບຸນມີ ບຸນທັນແສງງາມ ຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງນານ; ມີທ່ານ ຄຳເກົ່ງ ຈັນທະວິສຸກ ເລຂາຄະນະບໍລິຫານງານພັກເມືອງ, ເຈົ້າເມືອງເມືອງນານ, ມີຮອງເຈົ້າເມືອງ, ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າຫ້ອງການ-ອົງການທຽບເທົ່າຂັ້ນເມືອງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການລາຍງານຈາກທ່ານ ອຸ່ນດວງມະນີ ສະມາຊິກສະພາປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ປີ 2022 ແລະ ທິດທາງແຜນການ ປີ 2023 ຂອງຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງນານ ເຊິ່ງໄດ້ຍົກໃຫ້ເຫັນການຈັດຕັ້ງປະຕິບັດພາລະບົດບາດຂອງສະພາປະຊາຊົນແຂວງຢູ່ຂັ້ນເມືອງ, ການພົບປະ ແລະ ໃຫ້ຄຳປຶກສາແກ່ຜູ້ມີສິດເລືອກຕັ້ງ; ຫຼັງຈາກນັ້ນ, ທ່ານ ນາງ ແກ້ວລາມະນີຈິດ ເລຂາທິການສະພາປະຊາຊົນແຂວງ ໄດ້ຂຶ້ນຜ່ານມະຕິຂອງຄະນະປະຈຳສະພາປະຊາຊົນແຂວງ ເລກທີ 89/ຄປຈ, ລົງວັນທີ 6 ຕຸລາ 2022 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ-ນະຄອນ.

ໃນຕອນທ້າຍກອງປະຊຸມ, ທ່ານ ສິມພອນ ສີອຸດົມພັນ ໄດ້ໂອ້ລົມ ເພື່ອເນັ້ນໜັກໃນການຍົກສູງຄວາມຮັບຜິດຊອບທາງດ້ານການເມືອງ ເພື່ອຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາປະຊາຊົນແຂວງ ທີ່ກຳນົດໄວ້ໃນກົດໝາຍໃຫ້ມີປະສິດທິພາບສູງ.

ຕອນແລງວັນດຽວກັນ, ທ່ານ ສິມພອນ ສີອຸດົມພັນ ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງ, ໄດ້ໄປຢ້ຽມຢາມໂຮງງານຜະລິດແປ້ງມັນຕົ້ນ ຢູ່ບ້ານຫ້ວຍຫຼາ ແລະ ໂຄງການກໍ່ສ້າງຄອງເໝືອງຊົນລະປະທານນ້ຳແຊງ ຢູ່ເມືອງນານ ເພື່ອເປັນການຕິດຕາມກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານໂຄງການດັ່ງກ່າວອີກດ້ວຍ.

(ນາງ ຄຳຫຼ້າ ສະວະບຸດ, ສຸດາກອນ ໂພສະຫວັດ ແລະ ສາຍເຄນ ປານວິໄລ)

# ຄາຣາວານເພື່ອການກຸສົນຕ້ານໄພໜາວ ທີ່ຈຸດສຸມລາດທໍ້-ຜາບັງ ເມືອງເຊໂປນ

(ສພຊ) ໃນວັນທີ 18-19 ກຸມພາ 2023 ທ່ານ ຄຳຜັນ ຄູນສະຫວັນ ຮອງປະທານສະພາປະຊາຊົນແຂວງ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມຂະບວນຄາຣາວານລົດທ່ອງທ່ຽວ ເພື່ອການກຸສົນຕ້ານໄພໜາວ ແລະ ເດີນທາງໄປຊ່ວຍເຫຼືອປະຊາຊົນຢູ່ຈຸດສຸມລາດທໍ້-ຜາບັງ ເມືອງເຊໂປນ ໂດຍການເປີດຂະບວນຂອງຄະນະນຳຂອງແຂວງ, ມີພະແນກການ, ກົງສຸນໃຫຍ່ແຫ່ງລາຊະອານາຈັກໄທ, ຫ້ອງການ, ອົງການຈັດຕັ້ງທາງພາກລັດ ແລະ ເອກະຊົນ, ສະໂມສອນສະຫວັນໂຟຣວິນດາຍສ, ນັກທຸລະກິດ ຕະຫຼອດເຖິງນັກທ່ອງທ່ຽວຈາກແຂວງສະຫວັນນະເຂດ ແລະ ນັກທ່ອງທ່ຽວຈາກ 10 ແຂວງຂອງລາຊະອານາຈັກໄທເຂົ້າຮ່ວມ.



ທ່ານ ຄຳຜັນ ຄູນສະຫວັນ ໃນນາມຕາງໜ້າໃຫ້ຄະນະປະຈຳສະພາປະຊາຊົນແຂວງສະຫວັນນະເຂດ ໄດ້ນຳພາຄະນະ ເດີນທາງໄປໃນຂະບວນ ໂດຍໄດ້ນຳເອົາເຄື່ອງຊ່ວຍເຫຼືອທີ່ໄດ້ມາຈາກການປະກອບສ່ວນຂອງສັງຄົມ ທັງພາຍໃນແຂວງສະຫວັນນະເຂດ ແລະ 10 ແຂວງແຫ່ງຣາຊະອານາຈັກໄທ ເປັນຕົ້ນແມ່ນເຄື່ອງນຸ່ງຫົ່ມ, ອາຫານແຫ້ງ ອຸປະກອນການຮຽນ-ການສອນ, ເຄື່ອງກິລາ, ເຄື່ອງໃຊ້ອື່ນໆໃນຄົວເຮືອນ ແລະ ເງິນສົດຈຳນວນໜຶ່ງ ລວມມູນຄ່າທັງໝົດ 200 ກວ່າລ້ານກີບ ເປົ້າໝາຍໃນການມອບແມ່ນໃຫ້ 5 ບ້ານຄື: ບ້ານຜາບັງ, ບ້ານທ່າຜີງ, ບ້ານລະເວີນ, ບ້ານໃໝ່ທ່າແດງ, ບ້ານສະປອງ ແລະ 2 ໂຮງຮຽນ ຄື: ມສ ຜາບັງ, ໂຮງຮຽນບ້ານໃໝ່ທ່າແດງ ແລະ ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບຢູ່ເຂດຈຸດສຸມດັ່ງກ່າວ.

ອີງຕາມການລາຍງານຂອງທ່ານ ໂພສີສ້ອຍ ກຸທີລາດ ຫົວໜ້າພະແນກຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວແຂວງ ໃຫ້ຮູ້ວ່າ: ໂຄງການຈັດຄາຣາວານລົດທ່ອງທ່ຽວ ເພື່ອການກຸສົນຮ່ວມໃຈຕ້ານໄພໜາວນີ້ ເປັນໂຄງການໜຶ່ງທີ່ມີຈຸດປະສົງເພື່ອເປັນການຟື້ນຟູ ແລະ ສົ່ງເສີມການທ່ອງທ່ຽວທາງດ້ານທຳມະຊາດ ຕິດພັນກັບວັດທະນະທຳ ແລະ ວິຖີການດຳລົງຊີວິດຂອງຊາວແຂວງສະຫວັນນະເຂດ, ເປັນການແບ່ງປັນຄວາມສຸກ ໃຫ້ແກ່ປະຊາຊົນ ແລະ ນັກຮຽນ ທີ່ຢູ່ໄກສອກຫຼີກ ພ້ອມທັງເປັນການກະຕຸ້ນເສດຖະກິດຂອງແຂວງສະຫວັນນະເຂດ ໃຫ້ກັບມາຄຶກຄື້ນອີກຄັ້ງ, ການຈັດກິດຈະກຳປີນີ້ແຂວງສະຫວັນນະເຂດ ກໍຄືພະແນກພະແນກຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວແຂວງແມ່ນໄດ້ຮ່ວມກັບສະໂມສອນສະຫວັນໂຟວິນດາຍ ຈັດກິດຈະກຳຄາລາວານເພື່ອການກຸສົນນີ້ຂຶ້ນ ໂດຍມີບັນດາການນຳແຂວງ ຜູ້ປະກອບການທຸລະກິດ ກໍຄືນັກທ່ອງທ່ຽວພາຍໃນແຂວງສະຫວັນນະເຂດເຂົ້າຮ່ວມ ມີຄາຣາວານລົດທ່ອງທ່ຽວ 100 ກວ່າຄັນ.

# ພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມ ທີ່ເມືອງກະລຶມ

(ສພຊ) ເພື່ອເປັນການຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ບັນດາເນື້ອໃນສຳຄັນຕ່າງໆ ໃຫ້ຜູ້ມີສິດເລືອກຕັ້ງໄດ້ຮັບຮູ້ ແລະ ເຂົ້າໃຈ ທັງເປັນການພົບປະຜູ້ມີສິດເລືອກຕັ້ງ ແລະຢ້ຽມຢາມພໍ່ແມ່ປະຊາຊົນ; ໃນວັນທີ 7-11 ມີນາ 2023 ທ່ານ ດົງເຜັດ ພະຍົນ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 16, ປະທານສະພາປະຊາຊົນແຂວງ ພ້ອມດ້ວຍທ່ານ ດາສີ ສາຍວິໄລສັກ ແລະ ທ່ານ ສອນໄຫວ ດາລາສິນ ສສຂ ປະຈຳເມືອງກະລຶມ ໄດ້ເຄື່ອນໄຫວຢ້ຽມຢາມບ້ານຕ່າງໆທີ່ຫ່າງໄກສອກຫຼີກເພື່ອພົບປະກັບອຳນາດການປົກຄອງບ້ານທັງຢ້ຽມຢາມຖາມຂ່າວພໍ່ແມ່ປະຊາຊົນຈາກບັນດາບ້ານຕ່າງໆ.

ການເຄື່ອນໄຫວຄັ້ງນີ້ແມ່ນໄດ້ເຄື່ອນໄຫວຢູ່ 4 ຈຸດ ຄື: ບ້ານກະໂລ, ບ້ານປະໂຮະ, ບ້ານອູງ ແລະ ບ້ານຕຣຸຍ ເຊິ່ງໃນແຕ່ລະຈຸດທ່ານ ສສຊ-ສສຂ ແມ່ນໄດ້ເຄື່ອນໄຫວຮ່ວມຊີວິດຕິດແທດກັບພໍ່ແມ່ປະຊາຊົນແບບໂດຍກົງ ພ້ອມໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດວຽກງານການຊີ້ນຳ-ນຳພາວຽກງານຂອງອຳນາດການປົກຄອງໃນແຕ່ລະບ້ານ. ຈາກນັ້ນ, ບັນດາທ່ານ ສສຊ-ສສຂ ກໍໄດ້ພ້ອມພຽງກັນເຜີຍແຜ່ເນື້ອໃນຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ໃຫ້ບັນດາບ້ານ ແລະ ພໍ່ແມ່ປະຊາຊົນໄດ້ຮັບຮູ້. ພ້ອມນີ້, ກໍໄດ້ເປີດໂອກາດໃຫ້ພໍ່ແມ່ປະຊາຊົນໄດ້ຊັກຖາມ-ສະເໜີບັນຫາ ແລະ ຄວາມຕ້ອງການອັນຈຳເປັນຕໍ່ກັບບ້ານຕໍ່ກັບປະຊາຊົນ ໂດຍສະເພາະແມ່ນບັນຫາພື້ນຖານໂຄງລ່າງ, ການທຳມາຫາກິນ, ການປູກຝັງລ້ຽງສັດທີ່ຈະເປັນການສ້າງລາຍໄດ້ຫຼັກໃຫ້ແກ່ພໍ່ແມ່ປະຊາຊົນ.

ໂອກາດດັ່ງກ່າວ, ທ່ານ ດົງເຜັດ ພະຍົນ ຍັງໄດ້ມອບເຄື່ອງອຸປະໂພກ-ບໍລິໂພກຈຳນວນໜຶ່ງ ເປັນຕົ້ນແມ່ນເຂົ້າສານ, ໝີ່ສຳເລັດຮູບ, ເກີບ, ເຄື່ອງນຸ່ງຫົ່ມ, ຜ້າຫົ່ມ, ດອກໄຟພະລັງງານແສງອາທິດ (ໂຊລາເຊວ) ໃຫ້ບ້ານ; ມອບປຶ້ມ-ບິກ, ບານເຕະ, ບານສົ່ງ, ກະຕໍ້ທວາຍ, ທຸງຊາດລາວ-ທຸງພັກໃຫ້ແກ່ໂຮງຮຽນອີກດ້ວຍ.

ໃນໂອກາດດຽວກັນນີ້, ຄະນະຍັງໄດ້ຖືໂອກາດຢ້ຽມຢາມອ້າຍນ້ອງທະຫານກອງຮ້ອຍ 531 ແລະ ແຄ້ມງານຂອງບໍລິສັດ ພອນຊັບ ເພື່ອຮັບຟັງການລາຍງານຄວາມຄືບໜ້າຂອງເສັ້ນທາງນັບແຕ່ຫຼັກ 0km ຫາບ້ານຕຣຸຍ ເຊິ່ງມີໄລຍະ 17 km ແລະ ໄດ້ລົງຕິດຕາມສຳຫຼວດພາກສະໜາມ ເຊິ່ງເຫັນວ່າໄດ້ສຳເລັດກວ່າ 50% ແລ້ວ ຄາດວ່າປີ 2024 ຈະສຳເລັດສົມບູນ.

(ນາງ ສຸກກະສັນ ບົວລະພາ)




# ກົດໝາຍວ່າດ້ວຍການຄຸ້ມຄອງ ອາວຸດ ແລະ ວັດຖຸລະເບີດ

ຕໍ່ຈາກສະບັບກ່ອນ...

**ມາດຕາ 56 ສິດ ແລະ ໜ້າທີ່ຂອງກະຊວງປ້ອງກັນຄວາມສະຫງົບ**

ໃນການຄຸ້ມຄອງວຽກງານ ອາວຸດ ແລະ ວັດຖຸລະເບີດ ກະຊວງປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ກົດໝາຍ ແລະ ແຜນຍຸດທະສາດ ກ່ຽວກັບວຽກງານຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ ເພື່ອສະເໜີລັດຖະບານພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ ແລະ ແຜນຍຸດທະສາດ ກ່ຽວກັບວຽກງານຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ ມາເປັນແຜນການ, ແຜນງານ ແລະ ໂຄງການ ພ້ອມທັງຈັດຕັ້ງປະຕິບັດ;

ອ່ານຕໍ່ສະບັບໜ້າ...




# ວິທີເຮັດວຽກ

ພາກທີ 3

ພະຍາດເປັນແຕ່ປາກ

**1. ພະຍາດເປັນແຕ່ປາກແມ່ນຫຍັງ?.**

ພະຍາດເປັນແຕ່ປາກ ແມ່ນພະຍາດຂອງຄົນຜູ້ຮູ້ຈັກແຕ່ເວົ້າ ແຕ່ຫາກເຮັດແນວໂຕເວົ້ານັ້ນບໍ່ໄດ້, ເວົ້າສິ່ງທີ່ບໍ່ອອກມາຈາກຄວາມຄິດຂອງຕົນເອງ, ບໍ່ທັນເຂົ້າໃຈຄັກກໍຮີບຝ້າວແຕ່ເອົາໄປເວົ້າ, ຊອກອ່ານປຶ້ມ ແລະ ຊອກຮຽນທິດສະດີ ເພື່ອເອົາໄປເວົ້າອ້າງໝູ່ໃຫ້ເຂົາຍ້ອງວ່າໂຕຮູ້, ເວົ້າແນວໜຶ່ງຊໍ້າພັດໄປເຮັດແນວໜຶ່ງ ທີ່ກົງກັນຂ້າມກັບຄວາມເວົ້າຂອງຕົນເອງ.

ພວກເຮົາຕໍ່ສູ້ຊູດເກົາເຜົາລ້າງພະຍາດໃນເຮົາ ແລະ ພະຍາດໃຈແຄບອອກຈາກສະໝອງຂອງພວກເຮົາ, ພ້ອມກັນນັ້ນ ພວກເຮົາກໍຕ້ອງຊູດເກົາເຜົາລ້າງພະຍາດເປັນແຕ່ປາກໃຫ້ໝົດສິ້ນໄປນຳກັນ ເພາະວ່າພະຍາດທັງສອງຕົວນີ້ ມັນມັກໄປນຳກັນ. ດ້ວຍວ່າ ຕາບໃດຫາກຍັງມີພະຍາດເປັນແຕ່ປາກ ຕາບນັ້ນກໍຍັງມີພະຍາດໃນເຮົາ ແລະ ພະຍາດໃຈແຄບຢູ່ຄືກັນ.

ພະຍາດເປັນແຕ່ປາກນີ້ອອກມາຈາກໃສ?.

ພວກເຮົານີ້, ແຕ່ກ່ອນມາມັກເຄີຍໄດ້ອ່ານໜັງສືໄທ, ໜັງສືປາລີ ແລະ ຝຣັ່ງ, ອັງກິດ ຫຼື ເວົ້າ ແລະ ຂຽນຕາມນັ້ນ, ເພາະນັ້ນວິທີເວົ້າ ແລະ ຂຽນ ຈຶ່ງມັກໃຊ້ຄວາມເວົ້າຍືດຍາວເຂົ້າໃຈຍາກ ຟັງຍາກ ນັ້ນເປັນຍ້ອນພະຍາດໃນເຮົາ ແລະ ພະຍາດໃຈຄັບແຄບ.

**2. ວິທີແກ້ໄຂ.**

ນິດໄສເປັນແຕ່ປາກ ສະແດງອອກຫຼາຍຮູບດັ່ງລຸ່ມນີ້:

ກ) ເວົ້າຍືດຍາວບໍ່ມີເນື້ອໃນ:

ພະນັກງານເຮົາຫຼາຍຄົນມັກຂຽນຍາວ, ຂຽນປະໂຫຍກນີ້ໄປຕໍ່ໃສ່ປະໂຫຍກນັ້ນ, ຂຽນໜ້ານີ້ໄປຕໍ່ໃສ່ໜ້ານັ້ນ, ແຕ່ສິ່ງທີ່ຂຽນນັ້ນ ບໍ່ມີປະໂຫຍດຫຍັງໃຫ້ແກ່ຜູ້ອ່ານ ມີແຕ່ເຮັດໃຫ້ສິ້ນເປືອງກະດາດ, ນໍ້າເມິກ ແລະ ເສຍເວລາຜູ້ອ່ານໄປລ້າໆ.

ຂຽນເຮັດຫຍັງຍືດຍາວບໍ່ມີເນື້ອໃນແນວນັ້ນ? ຂຽນແນວນັ້ນ ແມ່ນເພື່ອບໍ່ໃຫ້ປະຊາຊົນອ່ານ. ມັນຍາວ ແລະ ບໍ່ມີຄວາມໝາຍຫຍັງ, ປະຊາຊົນເບິ່ງແລ້ວພາກັນແກວ່ງຫົວ ເພາະບໍ່ເຂົ້າໃຈ, ແລ້ວກໍບໍ່ກ້າເບິ່ງອີກ. ທ້າຍສຸດກໍມີແຕ່ໃຫ້ຜູ້ບໍ່ມີວຽກເຮັດງານທຳອ່ານເທົ່ານັ້ນ, ພວກນີ້ກໍພັດມີນິດໄສຊົ່ວຄືກັນກັບຜູ້ຂຽນນັ້ນແລ້ວ.

ອ່ານຕໍ່ສະບັບໜ້າ...

## ສືບຕໍ່...

(ຕໍ່ຈາກໜ້າ 1)

ເຜົ່າ ຂຽນໜ້າປະຫວັດສາດຍຸກໃໝ່ ອັນສະຫວ່າງສະໄຫວຂອງຊາດລາວເຮົາ ໄດ້ໝູນວຽນມາບັນຈົບຄົບຮອບ 68 ປີ (22/3/1955-22/3/2023) ເຊິ່ງການສະເຫຼີມສະຫຼອງວັນປະຫວັດສາດສຳຄັນດັ່ງກ່າວ ໄດ້ດຳເນີນໃນທ່າມກາງບັນຍາກາດທີ່ທົ່ວພັກ, ທົ່ວກອງທັບ ແລະ ປວງຊົນລາວເຮົາ ພວມອອກແຮງແຂ່ງຂັນຢ່າງເປັນຂະບວນກວ້າງຂວາງ ແລະ ຟົດຟື້ນໃນທົ່ວສັງຄົມ ໃນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ IX ຕິດພັນກັບ 2 ວາລະແຫ່ງຊາດ, ກອງປະຊຸມສະຫຼຸບວຽກງານກວດກາທົ່ວປະເທດປະຈຳປີ 2022, ກອງປະຊຸມວຽກງານການເມືອງແນວຄິດທົ່ວປະເທດ ຄັ້ງທີ V, ກອງປະຊຸມມຽກງານຈັດຕັ້ງທົ່ວປະເທດ, ການກະກຽມໃຫ້ແກ່ກອງປະຊຸມກາງສະໄໝ ແລະ ພາກພູມໃຈເປັນຢ່າງຍິ່ງທີ່ໄດ້ສຳເລັດການສະເຫຼີມສະຫຼອງວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 74 ປີ. ພິເສດ ພວກເຮົາໄດ້ສຳເລັດການສະເຫຼີມສະຫຼອງປີສາມັກຄີມິດຕະພາບ ລາວ-ຫວຽດນາມ 2022.

68 ປີ ກ່ອນໜ້ານີ້, ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທຳອິດ ໄດ້ຈັດຂຶ້ນໃນວັນທີ 22/3-6/4/1955 ທີ່ແຂວງຫົວພັນ ໂດຍມີຜູ້ແທນສົມບູນເຂົ້າຮ່ວມຈຳນວນ 20 ສະຫາຍ ເຊິ່ງຕາງໜ້າໃຫ້ສະມາຊິກພັກເກືອບ 400 ສະຫາຍໃນທົ່ວປະເທດ ໂດຍແມ່ນທ່ານ ໄກສອນ ພົມວິຫານ ເປັນປະທານ. ກອງປະຊຸມດັ່ງກ່າວ ແມ່ນມີຄວາມໝາຍສຳຄັນຫຼາຍດ້ານຄື: ແມ່ນເປັນການປະກາດສ້າງຕັ້ງພັກປະຕິວັດ ເຊິ່ງເປັນຕົວແທນຂອງຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານລາວບັນດາເຜົ່າ. ແມ່ນເປັນການສະແດງໃຫ້ເຫັນວ່າ ການກຳເນີດຂອງພັກປະຕິວັດ ແມ່ນຜົນຂອງການປະສານສົມທົບ ລະຫວ່າງລັດທິມາກ-ເລນິນ, ຂະບວນກຳມະກອນ ແລະ ຊາວຜູ້ອອກແຮງງານລາວທີ່ຮັກຊາດ. ພັກກຳເນີດຂຶ້ນໄດ້ວາງແນວທາງການເມືອງອອກຢ່າງຖືກຕ້ອງ ແລະ ສອດຄ່ອງກັບຍຸກສະໄໝ ໂດຍນຳພາທົ່ວປວງຊົນລາວ ສາມັກຄີຕໍ່ສູ້ເຮັດສຳເລັດພາລະກິດປົດປ່ອຍຊາດ, ສ້າງປະເທດລາວໃຫ້ເປັນປະເທດສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ ແລະ ວັດທະນາຖາວອນ.

ນັບຕັ້ງແຕ່ມື້ກຳເນີດເກີດຂຶ້ນ, ພັກໄດ້ວາງໂຄງການການເມືອງອັນຖືກຕ້ອງ, ນຳພາ-ຊີ້ນຳ ຂະບວນການຕໍ່ສູ້ປົດປ່ອຍຊາດ, ສາມາດເຕົ້າໂຮມຄວາມສາມັກຄີ, ການສະໜັບສະໜູນຂອງຊັ້ນຄົນຕ່າງໆ ເຂົ້າຮ່ວມການຕໍ່ສູ້ຢ່າງອົງອາດກ້າຫານ ແລະ ສາມາດຕີເອົາຊະນະຈັກກະພັດຜູ້ຮຸກຮານ ທີ່ມີກຳລັງແຮງລື່ນພວກເຮົາຫຼາຍເທົ່າ. ປັດຈຸບັນນີ້ ແມ່ນພວມນຳພາ-ຊີ້ນຳ ຈັດຕັ້ງປະຕິບັດແນວທາງປ່ຽນແປງໃໝ່ ເພື່ອນຳເອົາປະເທດຊາດຫຼຸດພົ້ນຈາກການດ້ອຍພັດທະນາ.

ຕະຫຼອດໄລຍະ 68 ປີ ແຫ່ງການເຕີບໃຫຍ່ຂະຫຍາຍຕົວ ແລະ ນຳພາ ພາລະກິດປະຕິວັດອັນສູງສົ່ງ, ພັກເຮົາ ຍາມໃດກໍເປັນເສນາທິການທາງການເມືອງທີ່ສະຫຼາດສ່ອງໃສ, ເປັນກອງນຳໜ້າທີ່ແໜ້ນແກ່ນ, ເປັນຕົວແທນແຫ່ງຜົນປະໂຫຍດຂອງຊາດ ແລະ ຊາວຜູ້ອອກແຮງງານທີ່ຮັກຊາດ ແລະ ກ້າວໜ້າ, ເປັນແກນນຳໃນລະບົບການເມືອງແຫ່ງລະບອບປະຊາທິປະໄຕ ປະຊາຊົນອັນເຂັ້ມແຂງ ແລະ ເປັນກຳລັງການເມືອງອັນໜຶ່ງອັນດຽວ, ມີຄວາມສາມາດປະຕິບັດບົດບາດນຳພາຕໍ່ທົ່ວສັງຄົມ, ນຳພາປະເທດຊາດໄປສູ່ຄວາມຈະເລີນຮຸ່ງເຮືອງ.

ພັກສາມາດສ້າງໄດ້ຜົນງານ ແລະ ມູນເຊື້ອອັນສະຫງ່າງາມ, ພັກໄດ້ວາງຍຸດທະສາດ, ຍຸດທະວິທີປະຕິວັດທີ່ສະຫຼາດສ່ອງໃສ, ນຳພາການຕໍ່ສູ້ປົດປ່ອຍຊາດຂອງປະຊາຊົນລາວບັນດາເຜົ່າ ອອກຈາກແອກຄອບຄອງຂອງພວກຈັກກະພັດລ່າເມືອງຂຶ້ນແບບເກົ່າ ແລະ ໃໝ່ ຢ່າງຍືດເຍື້ອຍາວນານ ແລະ ມີໄຊຍິ່ງໃຫຍ່. ພັກໄດ້ນຳພາສ້າງຕັ້ງກອງທັບ ແລະ ບັນດາກຳລັງປະກອບອາວຸດປະຕິວັດຂອງປະຊາຊົນ, ທັງໄດ້ເອົາໃຈໃສ່ກໍ່ສ້າງ ແລະ ປັບປຸງໃຫ້ເຕີບໃຫຍ່ເຂັ້ມແຂງ, ເປັນກຳລັງຫຼັກແຫຼ່ງໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ. ພັກເຮົາ ໄດ້ສ້າງກາລະໂອກາດ ແລະ ຂະຫຍາຍກຳລັງຕົວຈິງຂອງການປະຕິວັດ, ຕີສັດຕູໃຫ້ຖອຍໄປເທື່ອລະກ້າວ, ຍາດເອົາໄຊຊະນະຢ່າງຕໍ່ເນື່ອງ ກ້າວຂຶ້ນຍາດເອົາໄຊຊະນະຢ່າງສົມບູນດ້ວຍ 3 ບາດຄ້ອນຍຸດທະສາດ ແລະ ລຸກຮື້ຂຶ້ນຍຶດອຳນາດໂດຍສັນຕິວິທີ ສະຖາປະນາ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ຂຶ້ນໃນວັນທີ 2 ທັນວາ 1975 ສ້າງລະບົບອຳນາດການປົກຄອງປະຕິວັດຂຶ້ນໃນທົ່ວປະເທດ, ພັກນຳພາ ພາລະກິດປ່ຽນແປງໃໝ່ຢ່າງຮອບດ້ານ, ມີຫຼັກການ ໄດ້ຮັບຜົນສຳເລັດອັນສຳຄັນຫຼາຍປະການ, ສ້າງບັນດາປະຖົມປັດໄຈຂອງລະບອບສັງຄົມນິຍົມໃຫ້ປະກົດຂຶ້ນເປັນກ້າວໆ. ພັກໄດ້ກຳນົດ ແລະ ນຳພາປະຕິບັດຍຸດທະສາດ, ຍຸດໂທບາຍ ແລະ ນະໂຍບາຍຕ່າງໆ ດ້ານການພົວພັນຕ່າງປະເທດ ໃນແຕ່ລະໄລຍະຢ່າງຖືກຕ້ອງ ເຮັດໃຫ້ປະເທດເຮົາມີເພື່ອນມິດທັງຢູ່ໃກ້ ແລະ ໄກ ນັບມື້ນັບຫຼາຍ, ບົດບາດຂອງປະເທດເຮົາໃນເວທີສາກົນ ກໍໄດ້ຮັບການເຊີດຊູນັບມື້ນັບສູງຂຶ້ນ.

ເພື່ອເຊີດຊູເສີມຂະຫຍາຍຜົນງານ ແລະ ມູນເຊື້ອຂອງພັກປະຊາຊົນ ປະຕິວັດລາວ ພັກຕ້ອງສືບຕໍ່ປັບປຸງຕົນເອງ, ເຊີດຊູບົດບາດນຳພາ, ສ້າງພັກໃຫ້ປອດໃສ ເຂັ້ມແຂງ, ເພີ່ມທະວີຄວາມສາມັກຄີພາຍໃນພັກ, ຍຶດໝັ້ນຫຼັກການລວມສູນປະຊາທິປະໄຕ, ບຸກບືນສູ້ຊົນໃນການຈັດຕັ້ງປະຕິບັດບັນດາທິດທາງໜ້າທີ່ ແລະ ຄາດໝາຍສູ້ຊົນທີ່ກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກວາງອອກ, ຊຸກຍູ້ສົ່ງເສີມການຜະລິດເປັນສິນຄ້າ ຕິດພັນກັບການແກ້ໄຂຄວາມທຸກຍາກຂອງປະຊາຊົນ, ສຸມໃສ່ປັບປຸງປົວແປງຊີວິດການເປັນຢູ່ໃຫ້ດີຂຶ້ນ, ພັກຕ້ອງຍົກສູງຄວາມສາມາດນຳພາ ອຳນາດການປົກຄອງ ເພື່ອເຮັດໃຫ້ອຳນາດການປົກຄອງເສີມຂະຫຍາຍທາດແທ້ຂອງລັດເຮົາທີ່ເປັນລັດຂອງປະຊາຊົນ ໂດຍປະຊາຊົນ ແລະ ເພື່ອປະຊາຊົນ, ກໍ່ສ້າງກົງຈັກໃຫ້ປອດໃສຂາວສະອາດຢ່າງແທ້ຈິງ, ສືບຕໍ່ຮັບປະກັນຄວາມສະຫງົບທາງການເມືອງ ແລະ ຄວາມເປັນລະບຽບຮຽບຮ້ອຍທາງສັງຄົມ, ຕັ້ງໜ້າປະຕິບັດມາດຕະການຍຸດທະສາດຫັນລົງຮາກຖານ, ລະດົມປະຊາຊົນກໍ່ສ້າງຮາກຖານການເມືອງໃຫ້ເຂັ້ມແຂງ ຕິດພັນກັບການສ້າງບ້ານ, ກຸ່ມບ້ານພັດທະນາໃນແຕ່ລະທ້ອງຖິ່ນ ໃຫ້ນັບມື້ເພີ່ມຂຶ້ນ, ແກ້ໄຂຄວາມຫຍຸ້ງຍາກຕ່າງໆ ກໍຄືຕ້ານທຸກປະກົດການຫຍໍ້ທໍ້ໃນກົງຈັກການຈັດຕັ້ງພັກ-ລັດ ແລະ ມະຫາຊົນທາງດ້ານການສໍ້ລາດບັງຫຼວງ, ການຟຸ່ມເຟືອຍ, ອາດຍາສິດ, ຍົກສູງປະສິດທິຜົນ ແລະ ກຳລັງແຮງແຫ່ງການບໍລິຫານຂອງລັດໃຫ້ສູງຂຶ້ນ.

ສະມາຊິກພັກ, ພະນັກງານ ຈົ່ງຕັ້ງໜ້າຝຶກຝົນຫຼໍ່ຫຼອມຕົນເອງ, ປັບປຸງແກ້ໄຂຈຸດອ່ອນ ແລະ ຂໍ້ຄົງຄ້າງຕ່າງໆ, ຍົກລະດັບຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດໃຫ້ສູງຂຶ້ນ, ເພີ່ມທະວີຄວາມສາມັກຄີເປັນເອກະພາບ, ຄວາມເປັນແບບຢ່າງນຳໜ້າ ແລະ ຄວາມຮັບຜິດຊອບການເມືອງຂຶ້ນຕື່ມ ເພື່ອຮ່ວມກັນສ້າງກຳລັງແຮງໃຫ້ພັກ ເຮັດຫຼ້ອນພາລະກຳປະຫວັດສາດໃນເງື່ອນໄຂໃໝ່ໃຫ້ນັບມື້ສູງເດັ່ນຂຶ້ນ.

ພັກປະຊາຊົນ ປະຕິວັດລາວ ຜູ້ມີກຽດສະຫງ່າໝັ້ນຍືນ!

**ໂດຍ: ສີວັນ ຫອມໄຊຍະເດດ**




# ວິທີຄິດນຳມາເຊິ່ງຄວາມສຳເລັດ

# ຕົ້ນກົບເມກ



ການຕັ້ງຊື່ ຢ່າວ່າບໍ່ສຳຄັນ ທັງທີ່ເປັນຊື່ຄົນ ຊື່ສະຖານທີ່ຕ່າງໆ ຄົນລາວບູຮານເວົ້າໄວ້ໃຫ້ຄິດວ່າ: ຊື່ບໍ່ໃຫ້ເກີນສາມ ນາມບໍ່ໃຫ້ເກີນສີ່, ຜູ້ຂຽນເຂົ້າໃຈວ່າ: ຊື່ຄົນບໍ່ໃຫ້ເກີນສາມພະຍາງ ແລະ ນາມສະກຸນ ບໍ່ເກີນສີ່ພະຍາງ ນີ້ກໍເປັນພຽງຄຳເຫັນຄົນບູຮານ, ຜ່ານມາກໍມີການຕັ້ງຊື່ຕາມຍຸກສະໄໝຕ່າງໆຈາກຄົນບູຮານ; ບໍ່ທັ່ນນັ້ນ ບາງເຫດການບຸນ ທັງເປັນຂອງລາວ ແລະ ສາກົນ ທີ່ຖືກຈັດຂຶ້ນ ມັກເຫົ່າໄປຕາມກະແສຈີນ ມີທາງສຽງເກີດຂຶ້ນຕໍ່ການເອີ້ນຊື່ ການເຮັດບຸນ ບາງທາງສຽງມີຄຳເຫັນວ່າ: ວັດທະນະທຳບາງອັນຂອງຕາເວັນຕົກເຂັ້ມແຂງ ຍ້ອນເຂົາຖື ແລະ ເຫັນວ່າເຂົາຈະເລີນໝັ້ນຄົງກວ່າ, ຈະເລີນທາງການສຶກສາ, ສະຕິປັນຍາກວ່າ ດັ່ງນັ້ນ, ວັດທະນະທຳຂອງອາຊີ ຈຶ່ງບໍ່ສາມາດມີອິດທິພົນເໜືອເຂົາໄດ້; ກົງກັນຂ້າມ ບາງວັດທະນະທຳຕາເວັນຕົກຖືກຈັດກິດຈະກຳແຜ່ຜາຍຈາກສັງຄົມຄົນອາຊີ ບາງປະເທດເບິ່ງຄືເຮັດແບບບໍ່ຮູ້ສຶກໂຕ ກະຕຽມຄຶງ ອາຍ ຫຼື ບາງທີ ຖ້າສະຕິປັນຍາບໍ່ຮູ້ເທົ່າທັນ ກໍອາດຖືກກືນກິນແບບບໍ່ຮູ້ສຶກໂຕ.

ທ່ານປະທານ ຄຳໄຕ ສີພັນດອນ ໄດ້ມີຄຳເຫັນຕໍ່ກອງປະຊຸມພະນັກງານຖະແຫຼງຂ່າວ ແລະ ວັດທະນະທຳ ທົ່ວປະເທດ ປີ 1993 ເຊິ່ງມີບາງຕອນເພິ່ນເວົ້າວ່າ: ລັກສະນະຊາດ ຂອງວັດທະນະທຳ ມັນແມ່ນການສືບທອດຕໍ່ເນື່ອງກົມກຽວ... ມູນເຊື້ອ ແລະ ຍຸກສະໄໝ ເຊິ່ງຖ້າຕັດຂາດຈາກມູນເຊື້ອພື້ນຖານວັດທະນະທຳແຫ່ງຊາດ ຈະຂາດບ່ອນອີງ, ຂາດພື້ນຖານຂະຫຍາຍຕົວ...

ຜູ້ຂຽນເຫັນວ່າ ການໃສ່ຊື່ກໍແມ່ນນອນຢູ່ໃນວັດທະນະທຳ ວິຖີຊີວິດ ຖ້າຫາກບໍ່ແມ່ນເອກະລັກ, ຂາດເອກະລັກແລ້ວ ເຮົາຈະຮັກສາຕົວຕົນໄວ້ໄດ້ແນວໃດ?

ສັງລວມວ່າ: ເຖິງແມ່ນການສັງສັນເຂົ້າກັບສັງຄົມຫຼີກລ້ຽງບໍ່ໄດ້ ແຕ່ເຮົາກໍຄວນເບິ່ງຖີ່ຖ້ວນ; ຕັກເຕືອນ; ແນະນຳປະພຶດເປັນແບບຢ່າງ ຫຼີກເວັ້ນອັນໃດກໍເຫັນດີເຫັນງາມຕາມເຂົາໝົດສູ່ຢ່າງ ຈິດວິນຍານເອກະລັກຊາດ ຈະສູນເສຍໄປເທື່ອລະໜ້ອຍຖ້າເຮົາບໍ່ຕື່ນ...!

# 4 ບົດຮຽນ 6 ເປົ້າໝາຍຂອງພັກ

# ໂດຍ: ດອກຫຍ້າ

ບົນຈິດໃຈສ້າງການຫັນປ່ຽນໃໝ່, ກອງປະຊຸມໃຫຍ່ພັກຄັ້ງທີ XI ໄດ້ຮັບຮອງເອົາບົດຮຽນ 4 ປະການ ທີ່ຖອດຖອນໄດ້ ຈາກພຶດຕິກຳແຫ່ງການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ ກໍຄືພຶດຕິກຳຕົວຈິງໃນການນຳພາຂອງພັກເຮົາໃນຫຼາຍສິບປີຜ່ານມາ ເພື່ອບົດຮຽນ ແລະ ເປັນບ່ອນອີງສຳຄັນໃນການປັບປຸງ ການນຳພາຊີ້ນຳ ແລະການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກໃນຕໍ່ໜ້າ ດັ່ງນີ້:

1. ໃນການຍົກລະດັບຄວາມສາມາດ ແລະ ຄຸນນະພາບການນຳພາຂອງພັກ, ມີຄວາມຈຳເປັນ ຕ້ອງຮັບປະກັນການກຳນົດເນື້ອໃນໜ້າທີ່ການເມືອງໃຫ້ຖືກຕ້ອງ ແທດຕົວຈິງ ແລະ ມີຄວາມເປັນໄປໄດ້ໃນທາງປະຕິບັດ ຄຽງຄູ່ກັບການແກ້ໄຂບັນຫາດ້ານການຈັດຕັ້ງ, ການຈັດວາງບຸກຄະລາກອນ, ແບບແຜນການນຳພາ-ຊີ້ນຳ ແລະ ການຄຸ້ມຄອງ ດ້ານລະບຽບວິໄນ.

2. ການພັດທະນາເສດຖະກິດຂອງຊາດ ຕ້ອງມີການສົມທົບແໜ້ນ ລະຫວ່າງການຂະຫຍາຍພື້ນຖານການຜະລິດ ແລະ ບໍລິການຂະໜາດໃຫຍ່ຢ່າງມີຈຸດສຸມ, ສ້າງເປັນຂະແໜງການ ແລະ ຜະລິດຕະພັນປາຍແຫຼມ ກັບການຮັບປະກັນໃຫ້ຊາວຊົນນະບົດ, ຜູ້ປະກອບການມີການພັດທະນາ ທີ່ເລີ່ມຈາກສ້າງຄວາມສາມາດເພິ່ງຕົນເອງ ແລະ ພັດທະນາຍົກລະດັບຊີວິດການເປັນຢູ່ໃຫ້ດີຂຶ້ນເລື້ອຍໆ ເພື່ອຮັບປະກັນການສ້າງຖານເສດຖະກິດທີ່ເຂັ້ມແຂງ, ເປັນເຈົ້າຕົນເອງ ແລະ ແກ້ໄຂການຫຼຸດໂຕນແບບບໍ່ເປັນທຳ.

3. ຮັບປະກັນການພັດທະນາຊັບພະຍາກອນມະນຸດ ທັງດ້ານສະໜອງຄວາມຕ້ອງການ ທັງສ້າງເປັນກຳລັງຂັບເຄື່ອນ ໃຫ້ແກ່ການພັດທະນາດ້ານເສດຖະກິດ-ສັງຄົມ ແລະ ການປົກປ້ອງ-ເສີມຂະຫຍາຍສິດຜົນປະໂຫຍດຂອງພົນລະເມືອງ, ຄຸນຄ່າຄວາມເປັນມະນຸດ ແລະ ຄວາມສີວິໄລດ້ານຈິດໃຈຂອງຄົນລາວ.

4. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ບັນດາມະຕິຄຳສັ່ງຂອງພັກ ແລະ ແຜນການ, ໂຄງການພັດທະນາຂອງລັດ ຢູ່ແຕ່ລະຂັ້ນ ຕ້ອງບົນພື້ນຖານການສົມທົບ ລະຫວ່າງຮັບປະກັນການຕົກລົງບັນຫາຕົວຈິງແບບໝູ່ຄະນະຢ່າງເຂັ້ມງວດກັບການເຊີດຊູບົດບາດນຳພາຊີ້ນຳ-ບັນຊາ ຂອງຜູ້ເປັນຫົວໜ້າ, ເຮັດໃຫ້ທຸກຂະບວນການໄດ້ຮັບການກະຕຸ້ນ ແລະ ຂັບເຄື່ອນຖືກທິດ, ຕໍ່ເນື່ອງ, ແຂງແຮງ ແລະ ກ້າວສູ່ເປົ້າໝາຍທີ່ວາງອອກ.

(ອ່ານຕໍ່ສະບັບໜ້າ)




# ຈານ

ຈານ: ໃນຄຳວ່າ ຈານ ນີ້ ເປັນໄດ້ທັງກິລິຍາ ແລະຄຳນາມ ຈານ ແມ່ນການຂຽນໜັງສືໃສ່ໃບລານຂອງຄົນສະໄໝກ່ອນ ທີ່ຍັງບໍ່ທັນມີເຈ້ຍຂຽນ, ການຂຽນນີ້ ແມ່ນເພິ່ນຂຽນດ້ວຍເຫລັກຈານ, ເຫຼັກຈານແມ່ນໄມ້ທີ່ຫລອມໃຫ້ກົມ ຄືກັບປາກກາ ແລ້ວໃຊ້ເຫຼັກນ້ອຍໆສຳເຍັບ ຕອກເຂົ້າທາງສົ້ນໄມ້ ແນບໃຫ້ພົ້ນອອກມາ ແລ້ວນຳໄປພັນໃສ່ຫີນ ເພື່ອໃຫ້ຄົມຄາຍ ແລ້ວນຳໄປຂຽນໃສ່ໃບລານ, ການຂຽນແບບນີ້ ເພິ່ນເອີ້ນວ່າ ຈານ.

ຈານ ຍັງແມ່ນກຽດຕິຍົດຂອງພູ້ຊາຍລາວ ຄືພູ້ທີ່ໄດ້ບວດໃນພຸດທະສາສະໜາ ແລະ ໄດ້ຮັບເກລາພິເສກ ຫຼື ຫົດສົງ, ຫົດຄັ້ງທີໜຶ່ງ ເອີ້ນວ່າ ຈານສົມເດັດ, ຫົດຄັ້ງທີສອງ ເອີ້ນວ່າ ຈານຊາ, ຫົດຄັ້ງທີສາມ ເອີ້ນວ່າ ຈານຄູ. ເມື່ອສິກອອກຈາກວັດນັ້ນ ພູ້ທີ່ໄດ້ຫົດຄັ້ງທີໜຶ່ງ ເອີ້ນວ່າ ຈານ, ພູ້ທີ່ໄດ້ຫົດສອງເທື່ອ ເອີ້ນວ່າຈານຊາ, ພູ້ທີ່ໄດ້ຫົດເຖິງສາມເທື່ອ ເມື່ອສິກອອກມາ ກໍເອີ້ນວ່າ ຈານຄູ ດັ່ງນີ້:

ຈານ ຍັງເປັນຊື່ຂອງພັນໄມ້ແນວໜຶ່ງ ມີທັງຈານຕົ້ນ ແລະ ຈານເຄືອ. ຈານຕົ້ນ ເປັນຕົ້ນວ່າວໃຫຍ່, ເມື່ອຍາມເດືອນສາມ ຈະອອກເປັນດອກສີແດງ ຄືກັບດອກທອງ ແລະ ດອກງິ້ວປ່າ. ດອກຈານແດງ ເປັນດອກທີ່ແດງງາມ ອົງອາດ ສ່ວນໃຫຍ່ມັກເກີດຢູ່ຕາມຫົວໄຮ່ ປາຍນາ. ຈານເຄືອ ໃບກໍຄ້າຍຄືກັນກັບຈານຕົ້ນ ແຕ່ຈານເຄືອນີ້ ເປັນເຄືອຂະໜາດໃຫຍ່ ແລະ ບໍ່ປາກົດເຫັນດອກຂອງມັນ, ຈານເຄືອ ເປັນແມ່ກາຝາກຊະນິດໜຶ່ງ ເພາະມັນມັກທາວຂຶ້ນຕົ້ນໄມ້ອື່ນ ຫຼືກົ່ງງາໄມ້ອື່ນໆ ຈົນຕົ້ນໄມ້ຕາຍຄາ ກໍມີ ຈຸດພິເສດຂອງຈານເຄືອ ເມື່ອມັນກົ່ງງາໄມ້ ມັກຈະກົ່ງງາໄປທາງຊ້າຍສະເໝີ.

ຈານ ຍັງແປວ່າ ປົນ, ເຈືອ ດ້ວຍນ້ຳ ເຊັ່ນ ການເອົາເຂົ້າເກືອໝາຕ້ອງຈານໃສ່ນ້ຳ. ບາງຄົນກິນເຂົ້າ ກໍມັກເອົານ້ຳແກງຈານໃສ່ເຂົ້າ ແລ້ວເອົາບ່ວງຕັກກິນ ຄືດັ່ງກິນເຂົ້າປຽກ.

ຈານ ຍັງແມ່ນພາຊະນະໜຶ່ງ ສຳລັບໃສ່ອາຫານ ແລະ ເຂົ້າຈ້າວ ເຊິ່ງມີຮູບຮ່າງແບນ ແລະ ມົນ ເອີ້ນຈານ ຫລື ຈານໃສ່ເຂົ້າ.



# ຂຽນຄຳລາວໃຫ້ຖືກ

# ຄູແສງ

| ຄຳຖືກ | ຄຳຜິດ |
|---|---|
| ຫໍສະໝຸດ | ຫໍສະມຸດ |
| ມຸດນ້ຳ | ໝຸດນ້ຳ |
| ອາສາສະໝັກ | ອາສາສະມັກ |
| ສະມັກນ້ຳ | ສະໝັກນ້ຳ |
| ຫຍັບອອກ | ຍັບອອກ |
| ຜ້າຍັບ | ຜ້າຫຍັບ |
| ມະຫະກຳ | ມະຫາກຳ |
| ມະຫາສານ | ມະຫະສານ |



## ສຸກສະບາຍຫາຍໂຣຄາ

# ແຫຼ່ງໂປຣຕີນທາງເລືອກໃໝ່

ແປ ແລະ ຮຽບຮຽງໂດຍ: ສາວແວ່ນ



ເມື່ອເວົ້າເຖິງໂປຣຕີນ ຫຼາຍທ່ານຈະຄິດເຖິງໄກ່, ໄຂ່, ນົມ ແຕ່ໃນມື້ນີ້ເຮົາມີແຫຼ່ງໂປຣຕີນທາງເລືອກໃໝ່ມານຳສະເໜີ ນັ້ນກໍຄືແມງໄມ້ ເພາະວ່າ ໃນແມງໄມ້ບົດ 100 ກຣາມ ມີສານອາຫານທີ່ເປັນໂປຣຕີນເຖິງ 50%, ແຕ່ໃນຊີ້ນມີພຽງແຕ່ 30% ເທົ່ານັ້ນ.

ໃນປະເທດຂອງເຮົາໄດ້ມີການກິນແມງໄມ້ມາເປັນເວລາດົນນານແລ້ວ ແຕ່ມັນບໍ່ແມ່ນແຫຼ່ງໂປຣຕີນຫຼັກ ສ່ວນຫຼາຍຈະໄດ້ຈາກການກິນຊີ້ນ ເຊິ່ງປັດຈຸບັນ ປະເທດເຮົາໄດ້ມີການລ້ຽງແມງໄມ້ເປັນຈຳນວນຫຼວງຫຼາຍ ເພື່ອຕອບສະໜອງໃຫ້ແກ່ຄວາມຮຽກຮ້ອງຕ້ອງການຂອງທ້ອງຕະຫລາດ ແລະ ຜູ້ບໍລິໂພກ ເປັນຕົ້ນແມ່ນຈີ່ຫຼີດ, ດ້ວງພ້າວ...

ໃນບາງປະເທດ, ແມງໄມ້ຖືກນຳໃຊ້ເປັນສ່ວນປະກອບໃນອາຫານເຊັ່ນ ແຮມເບີເກີແມງໄມ້, ແມງໄມ້ສະເຕັກ, ພິດຊ່າໜ້າແມງໄມ້; ເພາະສະນັ້ນ ເຊື່ອແນ່ວ່າ ແມງໄມ້ຈະກາຍເປັນແຫຼ່ງໂປຣຕີນໃໝ່ໃນອານາຄົດຢ່າງແນ່ນອນ.

## ອາດ ກະວີລາວ

## 21 ມີນາ

# ໂດຍ: ອານົງເດດ ສີງດາລັກ

✻ 21 ມີນາ ລືຊ່າກ້ອງ ໄປທົ່ວໂລກາ
ວັນທີ່ປວງຊົນລາວ ມືດແສງສູນອ້ຳ
ສັດຕູກຳປືນແໜ້ນ ໂຈມຕີເຖິງຖິ່ນ
ສູນເສຍດິນບ່ອນບ້ານ ເຮືອນຊານຊີ້ນພັກເຊົາ

✻ ຈູດເຜົາຢ່າງໂຫດຮ້າຍ ເຂັ່ນຂູ່ປະຊາຊົນ
ຂົນກຳລັງໂຈມຕີ ຮຸກຮານທຳລາຍມ້າງ
ທາງທ່າແຂກຄືນກ້າ ມິຍອມເສຍເອກະລາດ
ເພື່ອຊາດພີ່ງພີ່ນ້ອງ ປອງດອງສູ້ບໍ່ຖອຍ

✻ ແຕ່ກຳລັງອ່ອນນ້ອຍ ເກີນກວ່າຊິທົນໄຫວ
ທ່າແຂກເລີຍເສຍໄຊ ພົບຄວາມເຈັບຊ້ຳ
ສັດຕູທຳລາຍມ້າງ ເຮືອນທຳເຄີຍຢູ່
ຜູ້ນຳເຈັບແສບແຄ້ນ ປະຊາເສຍເລືອດເນື້ອ ລະທົມເສົ້າໂສກຊວງ ໜ່າຍເດ!

✻ ພວກຜີມານປ່ວງບ້າ ຍິງກວາດຟຸງຊົນ
ດັບສູນຫຼາຍພັນຄົນ ແມ່ມານທັງແອນ້ອຍ
ເປັນກ່ຳພອຍໂຫຍໄຫ້ ຜົວເມຍຕາຍຈາກ
ເຫຼືອແຕ່ຊາກອັ່ງລົ້ນ ຟູຂຶ້ນເກື່ອນນະທີ

✻ 21 ມີນາແມ່ນມື້ ຝັງເລິກຊວງໃນ
ບໍ່ມີໃຜລືມຫຼົງ ລົບເລືອນລົງໄດ້
ກາຍເປັນທອນໄຟແຈ້ງ ເຍືອງທາງໃສສ່ອງ
ໄຂປ່ອງທາງບອກຊີ້ ປະຊາລາວຮັກຊາດເຊື້ອ ບໍ່ຍອມຂຶ້ນແກ່ໃຜ

✻ 21 ມີນາຈາລຶກໄວ້ ປະຫວັດສາດແດນລາວ
ເປັນແວ່ນແຍງຊາວເມືອງ ທີ່ເກີດລຸນຫຼັງນີ້
ໃຫ້ສາມັກຄີສ້າງ ພັດທະນາປະເທດຊາດ
ສອງໜ້າທີ່ຍຸດທະສາດຈຳຈີ່ໝັ້ນ ໃນເບື້ອງໜ່ວຍມະໂນ ແດ່ຖ້ອນ!

## ປຶກສາຫາລື...

(ຕໍ່ຈາກໜ້າ 1)

ປະຈຳເຂດເລືອກຕັ້ງເມືອງ, ໃນວັນທີ 14 ມີນາ 2023 ທີ່ສະພາແຫ່ງຊາດ ໄດ້ມີການຈັດກອງປະຊຸມປຶກສາສາຫາລືຄົ້ນຄວ້າຕຳແໜ່ງບໍລິຫານ ແລະ ກົງຈັກເສນາທິການຂອງສະພາປະຊາຊົນຂັ້ນແຂວງ ໂດຍການເປັນປະທານຂອງທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ, ຜູ້ຊີ້ນຳວຽກງານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ; ມີບັນດາທ່ານປະທານ-ຮອງປະທານ, ເລຂາທິການສະພາແຫ່ງຊາດ, ຕາງໜ້າຈາກຄະນະຈັດຕັ້ງສູນກາງພັກ, ກະຊວງພາຍໃນ ແລະ ແຂກທີ່ຖືກເຊີນເຂົ້າຮ່ວມ.

ກອງປະຊຸມດັ່ງກ່າວ, ໄດ້ຮັບຟັງການສະເໜີການຄົ້ນຄວ້າຕຳແໜ່ງບໍລິຫານ, ຮອງປະທານສະພາປະຊາຊົນຂັ້ນແຂວງ ຊຸດທີ II; ຄົ້ນຄວ້າຕຳແໜ່ງບໍລິຫານປະເພດ 4 ຢູ່ສະພາປະຊາຊົນຂັ້ນແຂວງ ຊຸດທີ II ແລະ ຄົ້ນຄວ້າການສ້າງຕັ້ງຂະແໜງການທີ່ສັງກັດກົງຈັກການຈັດຕັ້ງສະພາປະຊາຊົນຂັ້ນແຂວງ ແລະ ຫ້ອງການຄະນະສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງຂັ້ນເມືອງ; ນອກຈາກນີ້, ກອງປະຊຸມຍັງໄດ້ຮັບຟັງການປະກອບຄຳຄິດຄຳເຫັນໃສ່ຫົວຂໍ້ດັ່ງກ່າວຈາກບັນດາຕາງໜ້າຂອງຄະນະຈັດຕັ້ງສູນກາງພັກ, ກະຊວງພາຍໃນ ແລະ ຜູ້ເຂົ້າຮ່ວມກອງປະຊຸມ.

(ສອນສັກ ວັນວິໄຊ)



## ຫັກຫາຍ ລະບາຍ

(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

# ສາວຈົ້ມ

✻ **ຊົມ**ເຊີຍ! ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ **68 ປີ (22 ມີນາ 1955 - 22 ມີນາ 2023)** ໃນໂອກາດນີ້ ຂໍໃຫ້ພັກຜູ້ກຳ ນຳພາຊາດເຮືອງອຳໄພ ເປັນຮົ່ມໂພຮົ່ມໄຊ ໃຫ້ໄພ່ປະຊາຊົນລາວ ຂໍສົ່ງພອນໄຊໃຫ້ ການນຳພັກ-ລັດ ອາຍຸຍືນຍິ່ງໝັ້ນ ເປັນທອນໄພຮຸ່ງແຈ້ງ ປວງຊົນໄດ້ໄຕ່ຕາມ **ທ່ານເອີຍ!**

✻ **21** ມີນາ ນັ້ນຮັບທ່ານແຂກ ຄົບຮອບ 77 ປີ ເຊີ່ງເປັນມື້ທີ່ປະຊາຊົນລາວຜູ້ບໍລິສຸດຖືກສັງຫານປະມານສາມພັນຄົນ ຜູ້ຖືກຂ້າ 1/5 ແມ່ນເດັກນ້ອຍ ທີ່ກຽມເຕີບໂຕ ແລະ ກາຍເປັນໜໍ່ແໜງຂອງປະເທດຊາດໃນອະນາຄົດ. ເປັນວັນລະນຶກເຖິງນ້ຳໃຈເສຍສະຫລະອັນສູງສົ່ງຂອງປະຊາຊົນລາວ ກໍຄືການນຳສະໄໝກ່ອນ ເພື່ອປົກປ້ອງຜືນແຜ່ນດິນອັນແສນຮັກ ເຖິງແມ່ນເຫລັກຈະຫລາຍກວ່າຖ່ານ ແຕ່ຄວາມກ້າຫານເດັດດ່ຽວຕໍ່ສູ້ ຍອມເສຍສະຫລະແມ່ນແຕ່ຊີວິດ ເພາະ "ຄວາມຮັກຊາດແຮງກວ່າຄວາມຕາຍ" ຄົນສ່ວນຫລາຍຮັບຮູ້ ທອນກ່າວບຸນຄຸນ ຂໍໃຫ້ຄົນຮຸ່ນຫຼັງ ສືບສານຮັກສາໄວ້ ຂັ້ນໃນດິນສິນໃນນ້ຳ ການນຳໄດ້ຍາດແຍ່ງມານັ້ນ ຊ່ວຍກັນເສີມສືບສ້າງ ເມືອງບ້ານໃຫ້ຮຸ່ງເຮືອງ **ທ່ານເອີຍ!**

## ຊວນຍິ້ມ

# ແອ່ນຕຸ້ງ

**ເລື່ອງ: 99 ປີທີ່ພາຄິດ**

ຕູ້ສາອາຍຸ 66 ປີ ເປັນຄົນລວຍມີເງິນ ແລະ ຊັບສົມບັດຫລາຍລ້ານ; ມື້ໜຶ່ງ ລາວພາເມຍອາຍຸ 18 ປີ ໄປກິນເຂົ້າຢູ່ຮ້ານອາຫານ ພໍດີພໍ້ໝູ່ຄົນໜຶ່ງ, ໝູ່ສົງໄສເລີຍຖາມວ່າ:

**ໝູ່:** ມຶງເຮັດແນວໃດ ຄືໄດ້ເມຍສາວນ້ອຍ

**ຕູ້ສາ:** ຊິຍາກຫຍັງ ລາວຖາມກູວ່າຈັກປີ ກູກະບອກວ່າ 99 ປີ

**ໝູ່:** !!!



## ຄະຕິເຕືອນໃຈ

# ດອກສະຍອມ

ຢ່າອວດສູງ ກວ່າພໍ່ແມ່
ຢ່າອວດແນ່ ກວ່າຄູບາອາຈານ




# ກິນ – ດື່ມ

"ແມ່ເອີຍ! ລູກຢາກກິນນ້າມ" ສຽງເດັກນ້ອຍໃກ້ເຮືອນຮ້ອງດັງຊອດມາຮອດຫູບຸນຍືນທີ່ພວມນັ່ງພິມເອກະສານໃນເຮືອນຂອງຕົນເຮັດໃຫ້ຄວາມຄິດແຕກຊະຈີນໄດ້ຢຸດການພິມ ສະໝອງຄຳນຶງເຖິງຄຳວ່າ 'ນ້ຳ' ທີ່ຢູ່ນຳຫຼັງຄຳວ່າ 'ກິນ' ເວລາເວົ້າມັກອອກສຽງຍາວເປັນ 'ນ້າມ'.

ແຕ່ຄາວໜຶ່ງກໍໄດ້ຍິນສຽງຄົນລົມກັນຢູ່ທາງເດີ່ນບ້ານ...

"ມື້ແລງບໍ່ໄປດື່ມເບຍນຳກັນຫວາ?"

"ເພິ່ນບໍ່ໃຫ້ຊຸມແຊວກັນໄດ໋, ຫາຍເອີຍ!"

"ບໍ່ໄດ້ພໍ້ກັນດົນແລ້ວເດ!"

"ອິດເອົາສາ! ແລ້ວໂຄວິດຈຶ່ງວ່າກັນເດີ, ຫາຍ! ເລື່ອງດື່ມເຮົາບໍ່ຢ້ານດອກ ເຖິງໃສເຖິງກັນ!"

ບຸນຍືນເອົາຫູໂຕ່ງສຽງສົນທະນານັ້ນດ້ວຍຄວາມຕັ້ງໃຈ ແລ້ວສະໝອງເບື້ອງຂວາກໍຍົກເອົາຄຳວ່າ 'ກິນ' ແລະ 'ດື່ມ' ມາເປັນບັນຫາທີ່ຕ້ອງໄດ້ຊອກຫາຜູ້ມາແກ້ຊ່ວຍ, ກໍໜີບໍ່ພົ້ນລຸງຄຳຜູ້ຊ່ຽວຊານເລື່ອງພາສາລາວ... ພໍໄປຮອດ ບຸນຍືນກໍຕັ້ງຄຳຖາມຂຶ້ນວ່າ: "ເວລາເອົາທາດແຫຼວເຂົ້າປາກມັກຈະໄດ້ຍິນຄົນສ່ວນຫຼາຍເວົ້າວ່າ 'ກິນ' ເຊັ່ນ ກິນນ້ຳ ກິນຢາ ກິນເຫຼົ້າ ກິນເບຍ. ແຕ່ກໍໄດ້ຍິນໃນບາງຄັ້ງກໍວ່າ ດື່ມນ້ຳ ດື່ມເຫຼົ້າ ດື່ມເບຍ, ແຕ່ບໍ່ເຄີຍໄດ້ຍິນຜູ້ໃດເວົ້າວ່າ ດື່ມຢາ ຈັກເທື່ອ!ຢາກຮູ້ວ່າຄົນລາວເຮົາໃຊ້ສອງຄຳນີ້ມາແຕ່ເວລາໃດ ແລະ ມີຄວາມໝາຍຕ່າງກັນຢ່າງໃດ?"

ພໍແຕ່ຟັງຄຳຖາມສຸດ ລຸງຄຳກໍສາທະຍາຍຄວາມໝາຍທັງສອງຄຳຢ່າງລະອຽດດັ່ງນີ້: 'ກິນ' ເປັນຄຳກິລິຍາຈາກເຄົ້າລາວເດີມ ເຊິ່ງຄຳດັ້ງເດີມຈາກພາສາແມ່ເດີມຂອງຕະກຸນໄຕ ແມ່ນ k 'ກິນ' ເປັນຄຳລາວທີ່ໃຊ້ຮ່ວມກັບພາສາໄທ, ພາສາຍວນຊຽງໃໝ່ (ກິ໋ນ), ພາສາໄທລື້ 'ກິນ', ພາສາໄທດຳ 'ກິນ', ພາສາໄທໃຕ້ຄົງ(ກິນ), ພາສາໄທໃຫຍ່ 'ກິນ', ພາສາແສກ 'ກິ໋ນ', ພາສາຈ້ວງ k n 'ກິນ', ພາສາຈ້ວງແບບຈື່ວຈຽງ 'gin' ແລະຍັງມີບາງທ້ອງຖິ່ນອອກສຽງເປັນ 'ຈິນ'.

ຄວາມໝາຍຕົ້ນຕໍຂອງຄຳວ່າ 'ກິນ' ໝາຍເຖິງ "ຫຍໍ້າແລ້ວກືນ, ເຮັດໃຫ້ລ່ວງລົງຮູຄໍໄປສູ່ກະເພາະ" ເຊັ່ນ ກິນເຂົ້າ, ກິນເຝີ, ກິນໝີ່...

ຄວາມໝາຍທີສອງຂອງຄຳວ່າ 'ກິນ' ກໍໝາຍເຖິງ 'ເອົາທາດແຫຼວເຂົ້າປາກແລ້ວກືນ' ເຊັ່ນ ກິນນ້ຳ, ກິນເຫຼົ້າ, ກິນແກງ.

ທັງສອງຄວາມໝາຍນີ້, ຄົນລາວເຮົາໃຊ້ມາແຕ່ເກົ່າກ່ອນຈົນຮອດປັດຈຸບັນ ທີ່ເປັນລາຍລັກອັກສອນກໍແມ່ນຢູ່ໃນບັນດາບົດກອນ, ພາສິດ, ຄຳຜະຫຍາທີ່ໃຊ້ມາແຕ່ສະໄໝບູຮານ ເຊັ່ນຕົວຢ່າງລຸ່ມນີ້:

- ກິນເຂົ້າໂຕ ຢ່າໂສຄວາມເພິ່ນ
- ກິນມຳໆ ບໍ່ຄຳເບິ່ງທ້ອງ
- ກິນແກງໃຫ້ເຈົ້າຊອມດູກ້າງ ຄາຄໍຊິຈົ້ມຍາກ

ດູກໝູມັນຫາກໄປຢູ່ຄ້າງ ກິນນ້ຳຊິບໍ່ລົງ ຢູ່ໃນປຶ້ມ 'ໜັງສືຝາລັ່ງລາວໝໍຢາເອສຕະເດີ' (Dictionnaire et Guide Franco-Laotiens) ປີ 1885 ແລະ ປຶ້ມ 'Nouveau Dictionnaire Français-Laotiens' ປີ 1906 ໄດ້ບັນທຶກຄວາມໝາຍທັງສອງຂອງຄຳວ່າ 'ກິນ' ຢ່າງເປັນເອກະພາບກັນດັ່ງນີ້:

- manger ແປເປັນຄຳລາວໂດຍໃຊ້ໂຕລາແຕັງ kin (ກິນ)
- boire ແປເປັນຄຳລາວໂດຍໃຊ້ໂຕລາແຕັງ kin nam (ກິນນ້ຳ)

ນອກຈາກນັ້ນ 'ກິນ' ຍັງສາມາດໃຊ້ໃນຄວາມໝາຍແຝງ ເປັນຕົ້ນວ່າ:

- "ເປືອງ" ເຊັ່ນ ກິນເງິນ, ກິນເວລາ.
- "ເຮັດໃຫ້ໝົດເປືອງ" ເຊັ່ນ ລົດກິນນ້ຳມັນ, ແອໜ່ວຍນີ້ຈັ່ງແມ່ນກິນໄຟຫຼາຍ.
- "ຮັບເອົາ" ເຊັ່ນ ກິນສິນບົນ.
- "ຫາລາຍໄດ້ເຂົ້າຖົງໂດຍບໍ່ຊອບທຳ" ເຊັ່ນ ກິນເງິນກິນຄຳ, ກິນບ້ານກິນເມືອງ.
- "ໄດ້ໃນການຫຼິ້ນການພະນັນ" ເຊັ່ນ ຕານີ້ ເຈົ້າມີກິນລຽບ, ງວດນີ້ຕູ້ແດງຊື້ເລກຖືກແມ່ກິນໝົດ.

ສ່ວນຄຳວ່າ 'ດື່ມ' ເປັນຄຳທີ່ເກີດນຳຫຼັງຄຳວ່າ 'ກິນ', ຄຳນີ້ປາກົດເປັນລາຍລັກອັກສອນຄັກແນ່ແມ່ນຢູ່ໃນປຶ້ມແບບສອນອ່ານພາສາລາວ ປີ 1932 ໃນບົດທີ 16 ຄົນຂີ້ເຫຼົ້າ ເຊິ່ງມີປະໂຫຍກໜຶ່ງໃນບົດອ່ານຂຽນໄວ້ວ່າ "ເຫຼົ້ານັ້ນ, ຖ້າໂລພາດື່ມຫຼາຍ ກໍກາຍເປັນຂອງເບື່ອ".

'ດື່ມ' ເປັນຄຳກິລິຍາ ມີຄວາມໝາຍວ່າ "ກິນຂອງທີ່ເປັນນ້ຳ" ເປັນຕົ້ນວ່າ ດື່ມນ້ຳ ດື່ມກາເຟ ດື່ມເຫຼົ້າ ດື່ມເບຍ ແຕ່ບໍ່ໃຊ້ວ່າ ດື່ມແກງ ດື່ມຢາ (ຈະມັກເວົ້າວ່າ "ກິນແກງ, ກິນຢາ"). ຄຳນີ້ເປັນຄຳລາວທີ່ໃຊ້ຮ່ວມກັນກັບພາສາໄທ.

ຄຳວ່າ 'ດື່ມ' ນອກຈາກໃຊ້ໃນຄວາມໝາຍວ່າ "ກິນຂອງທີ່ເປັນນ້ຳ" ແລ້ວ, ກໍຍັງສາມາດໃຊ້ເປັນຄຳໄປປະສົມກັບຄຳອື່ນ ເພື່ອປະກອບສ້າງເປັນຄຳທີ່ມີຄວາມໝາຍໃໝ່ ເຊິ່ງປາກົດເຫັນບໍ່ມີຫຼາຍຄຳຄືກັບ 'ກິນ' ເປັນຕົ້ນວ່າ:

- 'ດື່ມ' ໄປຕໍ່ທ້າຍຄຳວ່າ 'ດູດ' ເປັນ 'ດູດດື່ມ' ໝາຍເຖິງ "ຊາບຊຶ້ງ" ເຊັ່ນ ຄວາມຮັກຂອງທັງສອງສຸດແສນດູດດື່ມ.
- 'ດື່ມ' ໄປຕໍ່ທ້າຍຄຳວ່າ 'ເຄື່ອງ' ເປັນ 'ເຄື່ອງດື່ມ' ໝາຍເຖິງ "ຜະລິດຕະພັນທີ່ເປັນອາຫານປະເພດຂອງແຫຼວ" ເຊັ່ນ "ນອກຈາກອາຫານແລ້ວ ພວກເຮົາຍັງມີເຄື່ອງດື່ມບໍລິການໃຫ້ທ່ານນຳອີກ".
- 'ດື່ມ' ຍັງສາມາດໄປຕໍ່ທ້າຍ 'ຮ້ານ' ແລະ 'ກິນ' ເປັນ 'ຮ້ານກິນດື່ມ' ເຊິ່ງໝາຍເຖິງ "ຮ້ານທີ່ບໍລິການທັງອາຫານແລະເຄື່ອງດື່ມ" ເຊັ່ນ ຕອນປິດປ່ອຍໃໝ່ໆ ຂ້ອຍມັກໄປກິນເຝີຖ້ວຍ 5 ກີບຢູ່ຮ້ານກິນດື່ມຂອງໂຮງຮຽນ.

ມາຮອດປັດຈຸບັນ ຄຳວ່າ 'ດື່ມ' ໄດ້ມາແທນທີ່ຄຳວ່າ 'ກິນ' ໃນເວລາທີ່ເອົາຂອງທີ່ເປັນນ້ຳເຂົ້າປາກແລ້ວກືນລົງກະເພາະ, ແຕ່ສັງຄົມກໍຍັງມັກໃຊ້ຄຳວ່າ 'ກິນ' ຢູ່ໃນຊີວິດປະຈຳວັນດັ່ງເກົ່າຢູ່. ສ່ວນຄຳວ່າ 'ດື່ມ' ນັ້ນ ກໍມີບາງຄົນມັກໃຊ້ ແຕ່ຈະໃຊ້ຢ່າງເປັນປົກກະຕິໃນວາລະໂອກາດທີ່ເປັນທາງການ ເຊັ່ນ

- ຂໍເຊີນບັນດາທ່ານຍົກຈອກດື່ມເພື່ອສຸຂະພາບ ແລະຄວາມສາມັກຄີ.

ທ່ານຜູ້ອ່ານເດ, ໃນຊີວິດປະຈຳວັນເວລາເອົານ້ຳເຂົ້າປາກແລ້ວກືນລົງກະເພາະມັກໃຊ້ຄຳໃດຫຼາຍກວ່າກັນລະຫວ່າງ 'ກິນ' ແລະ 'ດື່ມ'?

# ສະພາປະຊາຊົນແຫ່ງຊາດຈີນ ເລືອກຕັ້ງທ່ານ ສີ ຈິ້ນ ຜິງ ດຳລົງຕຳແໜ່ງສະໄໝທີ 3



ອີງຕາມການລາຍງານຂ່າວໃຫ້ຮູ້ວ່າ: ເມື່ອວັນທີ 13 ມີນາ 2023 ກອງປະຊຸມສະພາປະຊາຊົນແຫ່ງປະຊາດຈີນ ເຊິ່ງເປັນອົງການອຳນາດສູງສຸດແຫ່ງຊາດຈີນ ຊຸດທີ XIV ໄດ້ອັດລົງດ້ວຍຜົນສຳເລັດ ຢູ່ຫໍສະພາປະຊາຊົນແຫ່ງຊາດ ທີ່ນະຄອນຫຼວງປັກກິ່ງ ໂດຍທ່ານ ສີ ຈິ້ນ ຜິງ ໄດ້ຮັບເລືອກຕັ້ງເປັນປະທານປະເທດຈີນ ສະໄໝທີ 3 ເຊິ່ງທ່ານໄດ້ກ່າວຄຳປາໄສໃນພິທີປິດກອງປະຊຸມວ່າ: *"ຖືປະຊາຊົນໄວ້ຢູ່ໃນຖານະສູງສຸດ"*.

ຢູ່ທ່າມກາງສຽງຕົບມືທີ່ຄຶກຄື້ນ, ທ່ານ ສີ ຈິ້ນ ຜິງ ໄດ້ກ່າວຄຳປາໄສຄັ້ງທຳອິດຫຼັງຈາກດຳລົງຕຳແໜ່ງປະທານປະເທດຈີນ ເປັນສະໄໝທີ 3, ທ່ານໄດ້ສະແດງຄວາມຂອບໃຈຕໍ່ຜູ້ແທນສະພາປະຊາຊົນແຫ່ງຊາດ ແລະ ປະຊາຊົນບັນດາເຜົ່າໃນທົ່ວປະເທດທີ່ມີຄວາມໄວ້ເນື້ອເຊື່ອໃຈຕໍ່ຕົນເອງ, ໂດຍກ່າວວ່າ: ຄວາມໄວ້ເນື້ອເຊື່ອໃຈຂອງປະຊາຊົນແມ່ນແຮງຂັບເຄື່ອນໃຫຍ່ທີ່ສຸດທີ່ຊຸກຍູ້ໃຫ້ຕົນເອງກ້າວເດີນໄປຂ້າງໜ້າ, ແມ່ນຄວາມຮັບຜິດຊອບທີ່ໜັກໜ່ວງ. ທ່ານຈະປະຕິບັດໜ້າທີ່ຮັບຜິດຊອບຕາມທີ່ລັດຖະທຳມະນູນມອບໝາຍໃຫ້, ຖືຄວາມຕ້ອງການຂອງປະເທດເປັນພາລະກຳ, ຖືຜົນປະໂຫຍດຂອງປະຊາຊົນເປັນມາດຕະຖານ, ປະຕິບັດໜ້າທີ່ຕຳແໜ່ງຢ່າງເຄັ່ງຄັດ, ອຸທິດຕົນຢ່າງສຸດອົກສຸດໃຈ, ຈະບໍ່ເຮັດໃຫ້ຜູ້ແທນປະຊາຊົນ ແລະ ປະຊາຊົນບັນດາເຜົ່າໃນທົ່ວປະເທດຜິດຫວັງ.

ທ່ານ ສີ ຈິ້ນ ຜິງ ເຄີຍເປັນເລຂາໜ່ວຍພັກບ້ານຂັ້ນຮາກຖານທີ່ສຸດຂອງຈີນ, ເຄີຍດຳລົງຕຳແໜ່ງເລຂາຄະນະພັກເມືອງ, ເລຂາຄະນະພັກນະຄອນ, ເລຂາຄະນະພັກແຂວງ, ຈົນຮອດດຳລົງຕຳແໜ່ງຜູ້ນຳສູງສຸດຂອງຈີນ, ທ່ານໄດ້ປະຕິບັດຕາມແນວຄວາມຄິດການບໍລິຫານທີ່ "ມາຈາກປະຊາຊົນ ເພື່ອປະຊາຊົນ ອາໄສປະຊາຊົນ" ຢ່າງສະເໝີຕົ້ນສະເໝີປາຍ. ຫຼັງຈາກກາຍເປັນຜູ້ນຳສູງສຸດຂອງຈີນແລ້ວ, ທ່ານເຄີຍກ່າວວ່າ: "ປະຊາຊົນຈັດຂ້າພະເຈົ້າໄວ້ຢູ່ຕຳແໜ່ງນີ້, ຂ້າພະເຈົ້າກໍຕ້ອງຖືປະຊາຊົນໄວ້ຢູ່ໃນຖານະສູງສຸດຢູ່ໃນໃຈຢ່າງສະເໝີຕົ້ນສະເໝີປາຍ".

ໃນຄຳປາໄສຂອງທ່ານ ສີ ຈິ້ນ ຜິງ ຍັງໄດ້ສະແດງໃຫ້ເຫັນຄວາມຮັບຜິດຊອບດ້ານປະຫວັດສາດທີ່ໜັກແໜ້ນ. ທ່ານໄດ້ທວນຄືນຂະບວນການທີ່ພັກຄອມມູນິດຈີນນຳພາປະຊາຊົນຈີນບາກບັ່ນສູ້ຊົນຢ່າງທໍລະຫົດອົດທົນແລ້ວຊີ້ອອກວ່າ, ຜ່ານການບາກບັ່ນສູ້ຊົນມາເປັນເວລາຮ້ອຍປີ, ປະຊາຊົນຈີນໄດ້ກາຍເປັນເຈົ້າຂອງຊາຕາກຳຂອງຕົນ, ປະຊາຊາດຈີນໄດ້ຕ້ອນຮັບການກ້າວກະໂດດອັນຍິ່ງໃຫຍ່ຈາກການລຸກຂຶ້ນ ຮັ່ງມີຂຶ້ນ ແລະ ເຂັ້ມແຂງຂຶ້ນ, ການຟື້ນຟູຄວາມຈະເລີນຮຸ່ງເຮືອງອັນຍິ່ງໃຫຍ່ຂອງປະຊາຊາດຈີນໄດ້ກ້າວເຂົ້າສູ່ຂະບວນວິວັດທາງປະຫວັດສາດທີ່ບໍ່ສາມາດຕ່າວປີ້ນຄືນໄດ້.

ອີງຕາມເປົ້າໝາຍການພັດທະນາທີ່ກຳນົດໄວ້ໃນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XX ຂອງພັກຄອມມູນິດຈີນ, ເມື່ອຮອດໄລຍະກາງສະຕະວັດນີ້, ຈີນຈະສ້າງປະເທດສັງຄົມນິຍົມທັນສະໄໝ ແລະ ເຂັ້ມແຂງໃຫ້ສຳເລັດຜົນຢ່າງຮອບດ້ານ. ທ່ານ ສີ ຈິ້ນ ຜິງ ໄດ້ປຽບທຽບວ່າ "ການສ້າງສາປະເທດທີ່ເຂັ້ມແຂງ ແລະ ຟື້ນຟູຄວາມຈະເລີນຮຸ່ງເຮືອງຂອງປະຊາຊາດ" ເປັນການແຂ່ງຂັນແລ່ນຕໍ່ແຮງຄັ້ງໜຶ່ງ. ໃນຂະນະນີ້, ໄມ້ຕໍ່ແຮງໄດ້ມອບໃຫ້ຮຸ່ນຄົນຂອງທ່ານ ສີ ຈິ້ນ ຜິງ ນີ້ຢ່າງມີຄວາມໝາຍປະຫວັດສາດ.

ທ່ານໄດ້ໃຫ້ຄຳໝັ້ນສັນຍາຕໍ່ຜູ້ແທນສະພາປະຊາຊົນແຫ່ງຊາດ ແລະ ປະຊາຊົນບັນດາເຜົ່າທົ່ວໃນປະເທດ, ຈະສ້າງຜົນງານທີ່ບໍ່ເຮັດໃຫ້ຍຸກສະໄໝຜິດຫວັງ ບໍ່ເຮັດໃຫ້ປະຫວັດສາດຜິດຫວັງ ແລະ ບໍ່ເຮັດໃຫ້ປະຊາຊົນຜິດຫວັງໃນຂະບວນການອອກເດີນທາງຄັ້ງໃໝ່, ປະກອບສ່ວນເທົ່າທີ່ຄວນຂອງຄົນຮຸ່ນນີ້ເຂົ້າໃນການຊຸກຍູ້ການສ້າງສາປະເທດທີ່ເຂັ້ມແຂງ ແລະ ຟື້ນຟູຄວາມຈະເລີນຮຸ່ງເຮືອງຂອງປະຊາຊາດ.

ໃນການກ່າວຄຳປາໄສ, ທ່ານ ສີ ຈິ້ນ ຜິງ ຍັງໄດ້ບັນລະຍາຍອີກເທື່ອໜຶ່ງກ່ຽວກັບແນວຄວາມຄິດທີ່ສ້າງປະຊາຄົມຮ່ວມຊາຕາກຳຂອງມວນມະນຸດ. ທ່ານກ່າວວ່າ: ການພັດທະນາຂອງຈີນໄດ້ສ້າງຜົນປະໂຫຍດໃຫ້ແກ່ທົ່ວໂລກ, ການພັດທະນາຂອງຈີນບໍ່ສາມາດປາສະຈາກໂລກໄດ້. ຈີນ ຈະຊູຄັນທຸງສັນຕິພາບ ການພັດທະນາ ການຮ່ວມມື ແລະ ຕ່າງຝ່າຍຕ່າງມີຜົນປະໂຫຍດ, ຢືນຢູ່ຝ່າຍທີ່ຖືກຕ້ອງຂອງປະຫວັດສາດຢ່າງສະເໝີຕົ້ນສະເໝີປາຍ, ປະຕິບັດຕາມລັດທິຫຼາຍຝ່າຍທີ່ແທ້ຈິງ, ປະຕິບັດຄ່ານິຍົມຮ່ວມຂອງມວນມະນຸດ, ຕັ້ງໜ້າເຂົ້າຮ່ວມການປະຕິຮູບ ແລະ ການສ້າງສາລະບົບບໍລິຫານໂລກ, ຊຸກຍູ້ການສ້າງເສດຖະກິດໂລກແບບເປີດກວ້າງ, ຊຸກຍູ້ການຈັດຕັ້ງປະຕິບັດຂໍ້ລິເລີ່ມວ່າດ້ວຍການພັດທະນາຂອງໂລກ, ແລະ ຂໍ້ລິເລີ່ມວ່າດ້ວຍຄວາມໝັ້ນຄົງຂອງໂລກ, ເພີ່ມຄວາມໝັ້ນຄົງ ແລະ ກຳລັງແຮງທາງບວກຫຼາຍກວ່າເກົ່າໃຫ້ແກ່ສັນຕິພາບ ແລະ ການພັດທະນາຂອງໂລກ.




# ອຸທາຫອນສອນໃຈໃນຍຸກໄຮເທັກ

ມື້ນີ້ຂໍເວົ້າເລື່ອງອຸທາຫອນ ຫຼື ສະຕິສອນໃຈໃຫ້ລະວັງໄພໃນຍຸກດິຈິຕອນທີ່ມີແຮງຂັບເຄື່ອນຕົ້ນຕໍມາຈາກຄວາມກ້າວໜ້າລ້ຳຍຸກຂອງເຕັກໂນໂລຊີສື່ສານເພາະວ່າມາພ້ອມກັບຄວາມກ້າວໜ້າລ້ຳຍຸກດັ່ງກ່າວ ກໍມີເງົາມືດແອບແຝງມານຳ ເຊິ່ງສາມາດພິສູດໄດ້ຈາກບັນດາຕົວຢ່າງດັ່ງຕໍ່ໄປນີ້. ຂໍເລີ່ມຈາກປະເທດຝຣັ່ງກ່ອນໃນເດືອນມີນາ 2021, ເດັກຍິງຄົນໜຶ່ງໄດ້ຕັດສິນໃຈປິດຊີວິດຂອງຕົນເອງດ້ວຍການໂດດລົງແມ່ນ້ຳແຊນ ທີ່ໄຫຼຜ່ານໃຈກາງນະຄອນຫຼວງປາຣີ ດ້ວຍເຫດຜົນຕື້ນໆ ພຽງວ່າມີຜູ້ລັກເອົາຮູບຂອງນາງໄປເຜີຍແຜ່ຜ່ານສື່ສັງຄົມອອນລາຍ. ໃນພາບດັ່ງກ່າວ ນາງຢູ່ໃນຊຸດໂສ້ງຊ້ອນເສື້ອຊ້ອນ. ນອກຈາກເຫດການສະຫຍອງຂວັນທີ່ຍົກມາເປັນຕົວຢ່າງນີ້ແລ້ວ ກໍຍັງມີສະຖິຕິອື່ນໆທີ່ບອກວ່າຢູ່ປະເທດຝຣັ່ງນັ້ນ ເດັກນ້ອຍ 1 ໃນ 10 ຄົນ ຕົກເປັນເຫຍື່ອຂອງການຂົ່ມຂູ່, ໃສ່ຮ້າຍປ້າຍສີເຍາະເຍີ້ຍຖາກຖາງ ເຮັດໃຫ້ອັບອາຍ ຂາຍໜ້າ ກໍຄືການຂົ່ມເຫັງທາງດ້ານຈິດໃຈດ້ວຍວາຈາ ຫຼື ຮູບພາບເຫດການຂາດໂຕຕາຍຂອງເດັກຍິງຝຣັ່ງທີ່ກ່າວມາເທິງນີ້, ໄດ້ບັງຄັບໃຫ້ທາງການຝຣັ່ງຮີບຮ້ອນຮ່າງກົດໝາຍຕ້ານການກະທຳທີ່ເປັນການຂົ່ມຂູ່ສຽດສີ ແລະ ໃສ່ຮ້າຍຄົນອື່ນຜ່ານສື່ສັງຄົມອອນລາຍ. ກົດໝາຍໃໝ່ອ່ຽມສະບັບນີ້ໄດ້ປະກາດໃຊ້ນັບແຕ່ເດືອນກຸມພາ 2022 ເປັນຕົ້ນມາ. ກົດໝາຍໄດ້ກຳນົດໂທດຈຳຄຸກສູງສຸດ 3 ປີ ຕໍ່ຜູ້ກະທຳຜິດ ພ້ອມທັງປັບໄໝເປັນເງິນ 45.000 ເອີໂຣ. ຖ້າຫາກການກະທຳຜິດດັ່ງກ່າວເຮັດໃຫ້ຄົນອື່ນພະຍາຍາມຂ້າຕົວຕາຍຍ້ອນ ຫຼື ເຖິງຂັ້ນເຮັດໃຫ້ເຫຍື່ອຂ້າຕົວຕາຍ, ໂທດຕິດຄຸກຕໍ່ຜູ້ກະທຳຜິດກໍຈະເພີ່ມຂຶ້ນສູງສຸດ 10 ປີ ແລະ ອັດຕາການປັບໄໝ ກໍຈະກະດຶບຂຶ້ນ ເປັນ 150.000 ເອີໂຣ. ດ້ວຍກົດໝາຍດັ່ງກ່າວ, ຝຣັ່ງໄດ້ກາຍເປັນປະເທດທີ່ມີເຄື່ອງມືເຄັ່ງຄັດ ແລະ ເດັດຂາດທີ່ສຸດ ເພື່ອຕ້ານກັບທຸກຮູບການຂົ່ມຂູ່ ກໍຄືການທຳລາຍນ້ຳໃຈຄົນອື່ນຜ່ານສື່ສັງຄົມ. ຢູ່ ສປ ຈີນ ເມື່ອປະມານ 4 ປີ ຜ່ານມາ ກໍມີຂ່າວກ່ຽວກັບການປາບປາມການໂຄສະນາເກີນຄວາມເປັນຈິງ ເພື່ອຂາຍສິນຄ້າຜ່ານສື່ສັງຄົມອອນລາຍໂດຍສະເພາະແມ່ນການຈ່າວຂາຍຢາປົວພະຍາດທີ່ຍົກຍໍປັ້ນວ່າເປັນຢາ "ຂະໜານວິເສດ" ສາມາດປົວພະຍາດຮ້ອຍແປດພັນປະການໃຫ້ຫຼາຍໄດ້ປານປິດຖິ້ມບັ້ນປາບປາມເລີ່ມຂຶ້ນຢູ່ນະຄອນຈິງຈິງ ໂດຍສາມາດຈັບກຸມຜູ້ຕ້ອງສົງໃສຈຳນວນ 323 ຄົນ ທີ່ປອມເປັນແພດຊ່ຽວຊານໃນການປິ່ນປົວສຸຂະພາບຂອງຜູ້ເຖົ້າ ກໍຄືຄົນເຈັບຍ້ອນພະຍາດຕ່າງໆ.ບັນດາແພດປອມເຫຼົ່ານີ້ ລວຍທັງຂຶ້ນທັງລ່ອງຈາກການຮີດໄຖຄ່າປິ່ນປົວ ແລະ ຂາຍຢາ "ຂະໜານວິເສດ". ນອກຈາກນະຄອນຈິງຈິງແລ້ວ, ເຈົ້າໜ້າທີ່ຕຳຫຼວດຈີນຍັງສາມາດທັບມ້າງໄດ້ອີກ 16 ເຄືອຂ່າຍ ອາຊະຍາກຳ ແພດເຖື່ອນໃນ 30 ແຫ່ງ ຢູ່ 10 ແຂວງ ເຊິ່ງມີຄະດີໂຄສະນາຕົວະຍົວະຫຼອກລວງຂາຍຢາ 10,000 ກໍລະນີ. ອາຊະຍາກຳທີ່ວ່ານີ້ມີເງິນໝູນວຽນຈຳນວນ 10 ລ້ານກວ່າຢວນ (ປະມານ 1,51 ລ້ານໂດລາສະຫະລັດ) ຂ່າວບອກວ່າບັນດາແພດເຖື່ອນເຫຼົ່ານີ້ຊອກຫາກິນດ້ວຍເລ່ຫຼ່ຽມທີ່ສຸດແນບນຽນຄືພວກເຂົາເລີ່ມຕົ້ນແຊັດຊອກເກັບກຳຂໍ້ມູນກ່ຽວກັບຈຳນວນຄົນເຈັບ ແລະ ອາການພະຍາດທີ່ມີຄົນເປັນຢ່າງແຜ່ຫຼາຍ, ຈາກນັ້ນ ກໍພະຍາຍາມເຊື່ອມຕົວເຂົ້າຕາມບັນດາໂຮງພະຍາບານໃນຄາບ "ຜູ້ຊ່ຽວຊານ" ເພື່ອໃຫ້ໄດ້ມີໂອກາດໃກ້ຊິດກັບຄົນເຈັບ, ເມື່ອເຂົ້າເຖິງຄົນເຈັບໄດ້ແລ້ວພວກເຂົາກໍໃຊ້ວິທີຕົວະຍົວະຫຼອກລວງເພື່ອຂາຍຢາທີ່ໂອ້ອວດວ່າສາມາດປິ່ນປົວທຸກພະຍາດໃຫ້ຫາຍຂາດໄດ້.

ແຕ່ກໍໂຊກດີທີ່ທາງການຈີນສາມາດເລີກຮື້ກຸ່ມຊ່ຽວຊານແພດເຖື່ອນນີ້ໄດ້ຄຳຖາມມີຢູ່ວ່າແລ້ວກຸ່ມແພດເຖື່ອນນີ້ໄປຫຼົບຊ່ອນຢູ່ໃສ? ນີ້ລະທີ່ຕ້ອງມີສະຕິລະວັງຕົວເພາະວ່າພວກເຂົາອາດຈະໄປໂປໂລຫົວຢູ່ເຂດຫ່າງໄກສອກຫຼີກ ຫຼື ອາດຂ້າມຊາຍແດນໄປຫາກິນຢູ່ບັນດາປະເທດໃກ້ຄຽງກໍເປັນໄດ້. ໃນຍຸກດິຈິຕອນນີ້ກຸ່ມຄົນບໍ່ດີສາມາດນຳໃຊ້ເຄື່ອງມືສື່ສັງຄົມທີ່ກ້າວໜ້າ ເພື່ອໂຄສະນາຕົວະຍົວະຫຼອກລວງໄດ້ຢ່າງງ່າຍດາຍ ແລະ ວ່ອງໄວ. ນອກຈາກນັ້ນ ປາບປາມບັນດາຊ່ຽວຊານແພດເຖື່ອນແລ້ວ, ທາງການຈີນຍັງເຂັ້ມງວດກວດກາການໂຄສະນາຂາຍສິນຄ້າບໍລິໂພກຕ່າງໆທີ່ລອກລຽນແບບສິນຄ້າສີ່ດັງຂອງຕ່າງປະເທດ ເຊັ່ນ ນ້ຳສະອິ້ວແມ່ກກີ, ເມັດສະເລ,ຄະນໍ ແລະ ອື່ນໆ. ໃນເດືອນມັງກອນ 2017 ມີຂ່າວວ່າອົງການອາຫານ ແລະ ການຢາຈີນສາມາດກວາດລ້າງໂຮງງານປຸງແຕ່ງອາຫານທີ່ລອກລຽນແບບ ຫຼື ບໍ່ໄດ້ຄຸນນະພາບຈຳນວນ 50 ແຫ່ງຢູ່ນະຄອນທຽນສິນແຫ່ງດຽວ. ໂຮງງານເຫຼົ່ານີ້ມີລາຍໄດ້ຈາກການຂາຍຜະລິດຕະພັນປອມສູງເຖິງ 100 ຢວນຕໍ່ປີ.

ຂໍປິດທ້າຍບົດນີ້ ດ້ວຍຜົນປະໂຫຍດດີໆທີ່ໄດ້ຈາກການນຳໃຊ້ເຄື່ອງມືສື່ສັງຄົມລ້ຳຍຸກຄືໂທລະສັບມືຖືຊະນິດ "ສະມາດໂຟນ" ນີ້ລະຂ່າວໜ້າສົນທີ່ອອກມາຈາກອິນໂດເນເຊຍ ໃນວັນທີ 12 ຕຸລາ 2015 ນັ້ນ ແມ່ນກ່ຽວກັບຂໍ້ລິເລີ່ມຂອງທ່ານ ໂຈໂກ ວິໂດໂດ ປະທານາທິບໍດີອິນໂດເນເຊຍ ທີ່ຊຸກຍູ້ໃຫ້ປະຊາຊົນໃຊ້ໂທລະສັບມືຖືລາຍງານທາງການທີ່ກ່ຽວຂ້ອງດ່ວນກ່ຽວກັບການໃຫ້ບໍລິການຂອງພະນັກງານລັດທີ່ບໍ່ໄດ້ຄຸນນະພາບ ຊັກຊ້າ ບໍ່ຊື່ສັດ ແລະ ຂາດຄວາມຮັບຜິດຊອບເຊັ່ນ: ການສ້ອມແປງເສັ້ນທາງ, ໄຟຟ້າ, ນ້ຳປະປາ ແລະ ສິ່ງສາທາລະນຸປະໂພກປະເພດຕ່າງໆ ທັງນີ້ ກໍເພື່ອໃຫ້ພະນັກງານເຫຼົ່ານັ້ນ ມີສະຕິ ແລະ ໃຫ້ຂັ້ນເທິງສາມາດຈັດການກັບເຫຼົ່າພະນັກງານຂາດຄວາມຮັບຜິດເຫຼົ່ານີ້ ໄດ້ຢ່າງທັນການ.




ແມ່ຄືຜູ້ຢູ່ເບື້ອງຫຼັງຄວາມສຳເລັດຂອງລູກ

• ໂດຍ : ພູຜາ



## ຢຸດເຫົ່າ

*#ບ່າວກະບື*

ສົມສີ ແລະ ເມຍຂອງເຂົາ ຊື່ ສ່ຳໄວ ຜິດຖຽງເປັນເບື່ອເປັນເມົາ. ທັງສອງ ຊາກສຽງໃສ່ກັນ:

ສົມສີ: "ເຈົ້າຄິດວ່າຂ້ອຍເປັນຫຍັງ?, ເຈົ້າເຮັດກັບຂ້ອຍຄືຂ້ອຍເປັນໝານີ້ລະ"

ສ່ຳໄວ: "ຂ້ອຍບໍ່ເຄີຍຖືເຈົ້າຄືໂຕໝາຈັກເທື່ອ. ແຕ່ຟ້າເອີຍ... ເຊົາເຫົ່າຂ້ອຍດຽວນີ້ໄດ້ບໍ່ລະ?"

## STOP BARKING

***#BAOKBU***

Somsy and his wife, Samvay had a bitter quarrel and were yelling at each other:

Somsy: "What do you think I am? you treat me like a dog."

Samvay: " I never look up on you as a dog. But for God's sake, can you stop barking at me now?"



130

09 / 03 / 23

ທະນາຄານພັດທະນາລາວ
LDB Bank

ຜູ້ຊີ້ນຳ :
ທ່ານ ສົງຄຳ ວົງພະຈັນ

ຄະນະຊ່ຽວຊານທີ່ປຶກສາ :
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

ຄະນະບັນນາທິການ :
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ
ທ່ານ ອັນທະວີ ວົງພະຈັນ ຮອງ ບກ
ທ່ານ ເປຄຳ ລໍຄຳສອນ ຮອງ ບກ

ກອງບັນນາທິການ :
ນາງ ກົງໃຈ ແສງອຳພັນ
ນາງ ສຸພາວັນ ຫອມສະນິດ
ນາງ ປາກາລັກ ພົມມີໄຊ

ອອກແບບ - ຈັດໜ້າ :
ທ່ານ ຄຳຫວັນ ດາລາວົງ
ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ